# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

15-21 ກຸມພາ 2025
ປີທີ 14
ສະບັບທີ 1006
ລາຍສັປະດາ


## ປະທານສະພາແຫ່ງຊາດ ເນັ້ນໃຫ້ ອກສລ ກວດສອບເຂົ້າສູ່ລວງເລິກຢ່າງເຂັ້ມງວດ



(ສພຊ)-ຕອນບ່າຍວັນທີ 21 ກຸມພາຜ່ານມາ ທີ່ໂຮງແຮມຣໍລີເດອິນ ນະຄອນຫຼວງວຽງຈັນ, ທ່ານປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມເປັນປະທານ ແລະ ມີຄຳເຫັນໂອ້ລົມຕໍ່ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານກວດສອບ

ອ່ານຕໍ່ໜ້າ 2

## ສະຫະພັນແມ່ຍິງ ສພຊ ຢ້ຽມຢາມ ກອງພັນໃຫຍ່ 497 ທີ່ແຂວງວຽງຈັນ



ອ່ານຕໍ່ໜ້າ 8

## ຮອງປະທານ ສພຊ ເຄື່ອນໄຫວວຽກງານຢູ່ແຂວງຈຳປາສັກ



ອ່ານຕໍ່ໜ້າ 3

## ປະທານ ກກຂໝ ພົບປະເຈົ້າແຂວງບໍລິຄຳໄຊ ແລະ ຕິດຕາມກວດກາການໂຄສະນາເຜີຍແຜ່ກົດໝາຍຢູ່ແຂວງຄຳມ່ວນ



(ສພຊ)-ເມື່ອວັນທີ 18 ກຸມພາຜ່ານມາ ທີ່ຫ້ອງວ່າການແຂວງບໍລິຄຳໄຊ, ທ່ານ ຄຳແພງ ວິລະພັນ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ(ກກຂໝ)ພ້ອມດ້ວຍຄະນະທີ່ປະກອບດ້ວຍທ່ານຮອງປະທານກຳມາທິການ, ຫົວໜ້າກົມ ແລະ ພະນັກງານທີ່ກ່ຽວຂ້ອງຂອງ ກກຂໝ ໄດ້ເຂົ້າ

ອ່ານຕໍ່ໜ້າ 3

## ກອງທຶນຊ່ວຍເຫຼືອສັງຄົມ ພົບປະຄະນະພັນລະຍາທູດຫວຽດນາມ



(ສພຊ) - ຕອນເຊົ້າວັນທີ 20 ກຸມພາຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມພົບປະແລກປ່ຽນຄຳເຫັນລະຫວ່າງຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ກັບຄະນະພັນລະຍາທູດຫວຽດນາມປະຈຳ ສປປລາວ ຝ່າຍລາວນຳໂດຍສະຫາຍ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ, ຝ່າຍຫວຽດນາມນຳໂດຍສະຫາຍ ນາງ ຫວູ ຖິ ຢຸງ (Vũ Thị Dung) ພັນລະຍາເອກອັກຄະລັດຖະທູດ

ອ່ານຕໍ່ໜ້າ 10

## ຄະນະຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມກອງປະຊຸມໃຫຍ່ຂອງ APA ຄັ້ງທີ 45




(ສພຊ)-ວັນທີ 18-21 ກຸມພາ 2025 ຄະນະຜູ້ແທນສະພາແຫ່ງຊາດນຳໂດຍທ່ານພອນສານ ວິໄລເມັ້ງ ສະມາຊິກສະພາແຫ່ງຊາດ, ຮອງປະທານຄະນະບໍລິຫານງານສູນກາງສະຫະພັນກຳມະບານລາວ ໄດ້ເຂົ້າຮ່ວມກອງປະຊຸມໃຫຍ່ຂອງສະມັດຊາລັດຖະສະພາອາຊີ (APA) ຄັ້ງທີ 15 ທີ່ນະຄອນຫຼວງບາກູ, ສາ

ອ່ານຕໍ່ໜ້າ 5


ຮ່າງ ລັດຖະທຳມະນູນ... (ໜ້າ 6)


ຄອນຈັດການແຂ່ງຂັນ... (ໜ້າ 8)


6 ວິທີ... (ໜ້າ 9)


Togo ຈັດເລືອກຕັ້ງ... (ໜ້າ 10)


ໂຄງປະກອບລັດຖະບານ... (ໜ້າ 11)


ລືບຄ່າທຳນຽມ... (ໜ້າ 12)




## ປະທານ...

(ຕໍ່ຈາກໜ້າ 1)

ແຫ່ງລັດ ປະຈຳປີ 2024 ແລະ ທິດທາງແຜນການປີ 2025; ໂດຍມີທ່ານວຽງທະວີສອນເທບພະຈັນ ກຳມະການສຳຮອງສູນກາງພັກ, ປະທານອົງການກວດສອບແຫ່ງລັດ (ອກສລ) ແລະ ບັນດາທ່ານຮອງປະທານອົງການກວດສອບແຫ່ງລັດ, ການນຳຂັ້ນສູງທີ່ມາຈາກພາກສ່ວນຕ່າງໆ ພ້ອມດ້ວຍພະນັກງານ ອກສລ ເຂົ້າຮ່ວມ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍແລະຕີລາຄາສູງຕໍ່ຄວາມເອົາໃຈໃສ່ຂອງຄະນະນຳອົງການກວດສອບແຫ່ງລັດແລະອົງການກວດສອບປະຈຳພາກ ທີ່ໄດ້ລົງເລິກນຳພາ-ຊີ້ນຳການກວດສອບໃນເປົ້າໝາຍຕ່າງໆ; ຜົນງານທີ່ຍາດມາໄດ້ນັ້ນ ແມ່ນການປະກອບສ່ວນສຳຄັນຂອງສະມາຊິກພັກ, ພະນັກງານ-ລັດຖະກອນ ກໍຄືນັກກວດສອບ ທີ່ມີຄວາມພະຍາຍາມເຮັດວຽກງານຕາມແຜນການ; ການປະຕິບັດໜ້າທີ່ການກວດສອບໂດຍລວມແມ່ນມີຄວາມເຂັ້ມງວດ, ມີລະບຽບວິໄນ ແລະ ປະຕິບັດຕາມຫຼັກການເຄື່ອນໄຫວວຽກງານກວດສອບແຫ່ງລັດ ທີ່ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ; ເປັນເອກະລາດໃນເວລາດຳເນີນການກວດສອບແລະສະຫຼຸບຜົນການກວດສອບ; ມີປະຊາທິປະໄຕ, ມີຄວາມເຂັ້ມງວດ ແລະ ທັນເວລາ; ມີຂໍ້ມູນຫຼັກຖານຄົບຖ້ວນ, ຊັດເຈນແລະຖືກຕ້ອງກັບຄວາມເປັນຈິງ; ມີຄວາມທ່ຽງທຳ, ມີຈັນຍາບັນ, ມີຄວາມຍຸຕິທຳ, ໂປ່ງໃສ ແລະ ມີລັກສະນະວິທະຍາສາດ; ໄດ້ປະຕິບັດຕາມຫຼັກການນຳພາຂອງພັກ. ທ່ານປະທານສະພາແຫ່ງຊາດ ຍັງໄດ້ມີຄວາມເຫັນ ເພື່ອເປັນທິດທາງໃຫ້ເອົາໃຈໃສ່ວຽກງານໃນຕໍ່ໜ້າຈຳນວນໜຶ່ງ ຄື:

1. ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນ ໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ, ຢຶດໝັ້ນຕໍ່ອຸດົມການຂອງພັກ, ມີສະຕິຕໍ່ການຈັດຕັ້ງ, ເຄົາລົບລະບຽບກົດໝາຍ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່, ຮັກວິຊາສະເພາະ, ມີແນວຄິດອຸ່ນອ່ຽນທຸ່ນທ່ຽງ, ຕັ້ງໃຈບຸກບືນປະຕິບັດໜ້າທີ່, ມີຄວາມເສຍສະຫຼະ, ມີຈັນຍາບັນຂອງພະນັກງານນັກກວດສອບທີ່ໜັກແໜ້ນ, ບໍ່ສວຍໃຊ້ໜ້າທີ່, ບໍ່ຮັບສິນບົນ ແລະ ບໍ່ຕໍ່ລອງຜົນປະໂຫຍດໃດໆ, ຕ້ອງມີຄວາມສັດຊື່ບໍລິສຸດເປັນແບບຢ່າງທີ່ດີເພື່ອສ້າງຄວາມເຊື່ອໝັ້ນເຊື່ອຖືໃຫ້ເປົ້າໝາຍທີ່ຖືກກວດສອບ ແລະ ຕໍ່ສັງຄົມ.

2. ໃນສະພາບເສດຖະກິດ-ສັງຄົມມີການພັດທະນາຂະຫຍາຍຕົວ, ເຕັກໂນໂລຊີມີຄວາມກ້າວໜ້ານັ້ນ ການລະເມີດກົດໝາຍ, ລະບຽບການ, ວິໄນແຜນການ-ການເງິນ ກໍມີຄວາມເລິກແລບແນບນຽນ; ສະນັ້ນ, ອົງການກວດສອບແຫ່ງລັດຈະຕ້ອງໄດ້ພັດທະນາວຽກງານຂອງຕົນໃຫ້ສາມາດຮອງຮັບກັບສະພາບການໄລຍະໃໝ່ ເປັນຕົ້ນການປັບປຸງກົນໄກ, ລະບຽບການ, ແບບແຜນວິທີນຳພາ ແລະ ວິທີເຮັດວຽກຂອງອົງການກວດສອບແຫ່ງລັດ ໃຫ້ຄວາມສຳຄັນຕໍ່ກັບວຽກງານ ໂດຍຫັນເປັນທັນສະໄໝ, ນຳໃຊ້ເຕັກໂນໂລຊີໝູນໃຊ້ເຂົ້າໃນວຽກງານໃຫ້ມີຄວາມສະດວກ, ວ່ອງໄວ, ໂລ່ງລ່ຽນ, ປະຢັດເວລາ ແລະ ທັນກັບສະພາບການຢ່າງເຂັ້ມງວດ.

3. ບັນຫາຕົ້ນຕໍທີ່ເປັນຈຸດສຸມຂອງວຽກງານກວດສອບແຫ່ງລັດໃນຕໍ່ໜ້າ ແມ່ນການເຮັດໃຫ້ຜົນການກວດສອບໄດ້ຮັບການແກ້ໄຂຕາມກົດໝາຍຢ່າງເຂັ້ມງວດ ແລະ ທັນເວລາ; ຖ້າຜູ້ກະທຳຜິດບໍ່ຖືກລົງໂທດຕາມກົດໝາຍ ກໍຈະເປັນແບບຢ່າງບໍ່ດີໃຫ້ມີກໍລະນີອື່ນເກີດຂຶ້ນ ແລະ ເກີດຂຶ້ນເລື່ອຍໆ, ນັບມື້ຫຼາຍຂຶ້ນ ແລະ ຂອບເຂດກວ້າງອອກ. ສະນັ້ນ, ຈຶ່ງສະເໜີໃຫ້ລັດຖະບານ ມີກົນໄກໃນການແກ້ໄຂຜົນການກວດສອບຕາມມະຕິຂອງສະພາແຫ່ງຊາດ ໃຫ້ປາກົດຜົນເປັນຈິງ ໂດຍສະເພາະການປະຕິບັດມາດຕະການຕັດລາຍຈ່າຍນອກແຜນອອກຈາກແຜນງົບປະມານຂອງຫົວໜ່ວຍທີ່ມີການລະເມີດ, ຫັກລົບມູນຄ່າໜ້າວຽກທີ່ບໍ່ໄດ້ຈັດຕັ້ງປະຕິບັດອອກຈາກມູນຄ່າໂຄງການ ແລະການແກ້ໄຂເລັ່ງທວງໜີ້ຕ້ອງຮັບ, ການສະສາງລາຍຈ່າຍລ່ວງໜ້າໃນລະບົບຄັງເງິນແຫ່ງຊາດ.

4. ໃຫ້ຄົ້ນຄວ້າກົນໄກການປະຕິບັດນະໂຍບາຍຕາມດຳລັດວ່າດ້ວຍນະໂຍບາຍຕໍ່ຜູ້ມີຜົນງານ, ຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບງົບປະມານແຫ່ງລັດ ເລກທີ 349/ລບ, ລົງວັນທີ 13 ພະຈິກ 2023 ແລະ ຄຳແນະນຳຂອງກະຊວງການເງິນ ເລກທີ 1939/ກງ, ລົງວັນທີ 30 ພຶດສະພາ 2024 ໃຫ້ໂລ່ງລ່ຽນ, ວ່ອງໄວ ແລະ ທັນການ.

5. ຫັນປ່ຽນທິດທາງການກວດສອບ ກ້າວເຂົ້າສູ່ລວງເລິກຢ່າງເຂັ້ມງວດ, ເອົາຈິງເອົາຈັງສະກັດກັ້ນອັດຊ່ອງວ່າງການຮົ່ວໄຫຼດ້ານລາຍຮັບ-ລາຍຈ່າຍງົບປະມານແຕ່ຫົວທີ ໃຫ້ທັນກັບສະພາບການແລະເຂັ້ມງວດການໃຫ້ຄຳເຫັນແນະນຳ, ສະເໜີປະຕິບັດວິໄນຕໍ່ອົງການຈັດຕັ້ງ ຫຼື ຜູ້ກະທຳຜິດລະເມີດກົດໝາຍຢ່າງເຂັ້ມແຂງ; ຢາກໄດ້ຄືແນວນັ້ນອົງການກວດສອບຕ້ອງໄດ້ເລືອກເຟັ້ນພະນັກງານນັກກວດສອບທີ່ມີຄວາມຮູ້, ຄວາມສາມາດ, ມີຈັນຍາບັນໃນອາຊີບ ເພື່ອກໍ່ສ້າງ, ບຳລຸງ, ຍົກລະດັບຄວາມຮູ້ເຕັກນິກສະເພາະດ້ານທີ່ຈຳເປັນ ຕິດພັນກັບວຽກງານກວດສອບແຫ່ງລັດ ເປັນຕົ້ນ: ວຽກກໍ່ສ້າງຂົວ-ທາງ, ເຄຫາສະຖານ, ພະລັງງານ ແລະ ບໍ່ແຮ່ ໃຫ້ກາຍເປັນຜູ້ຊຳນານກວດສອບສະເພາະດ້ານ.

6. ເພື່ອເຮັດໃຫ້ວຽກງານກວດສອບແຫ່ງລັດດຳເນີນໄປດ້ວຍຜົນສຳເລັດຕາມແຜນການທີ່ສະພາແຫ່ງຊາດຮັບຮອງ ສະເໜີໃຫ້ລັດຖະບານ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ທະນາຄານແຫ່ງສປປລາວ, ລັດວິສາຫະກິດ, ອົງການຄຸ້ມຄອງໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ຈົ່ງເອົາໃຈໃສ່ຢ່າງເຂັ້ມງວດໃນການແກ້ໄຂບັນຫາຕາມມາດຕະການແນະນຳທີ່ອົງການກວດສອບແຫ່ງລັດໄດ້ລາຍງານຕາມມະຕິສະພາແຫ່ງຊາດດ້ວຍຄວາມຈິງໃຈ, ກ້າເຮັດກ້າຮັບຜິດຊອບ, ກ້າລາຍງານຕາມຄວາມຈິງ, ຊອກຫາທາງອອກຮ່ວມກັນ; ກໍລະນີອົງການຈັດຕັ້ງໃດ, ບຸກຄົນໃດ ມີການລະເມີດດ້ວຍຄວາມຕັ້ງໃຈ, ມີການວາງແຜນຊອກຫາຊ່ອງວ່າງເພື່ອເອື້ອຜົນປະໂຫຍດສ່ວນຕົວ ຫຼື ໝູ່ຄະນະ, ອົງການຄຸ້ມຄອງເປົ້າໝາຍນັ້ນ ຕ້ອງໄດ້ລົງແກ້ໄຂຢ່າງຮີບດ່ວນຕາມຂະບວນການຂອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມແຂງ, ເດັດຂາດ.

7. ວຽກງານກວດສອບແຫ່ງລັດເປັນວຽກທີ່ສຳຄັນ, ຈຳເປັນແລະຂາດບໍ່ໄດ້ສຳລັບການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ; ດ້ວຍເຫດນັ້ນ, ຄະນະພັກ ແລະ ອົງການປົກຄອງທຸກຂັ້ນ ຕ້ອງມີຄວາມຮັບຜິດຊອບໂດຍກົງຕໍ່ວຽກງານນີ້ ແລະ ເອົາວຽກນີ້ເປັນມາດຕະຖານ ຫຼື ໄມ້ຫຼາວັດແທກໜຶ່ງ ຕໍ່ການນຳພາຂອງຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ກໍຄືກະຊວງ, ອົງການແລະແຂວງ-ນະຄອນຫຼວງ ໃນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ປະຕິບັດວິໄນຕໍ່ຜູ້ລະເມີດ. ອັນສຳຄັນ ແມ່ນໃຫ້ຖືເອົາເນື້ອໃນຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ມາດ ຕາ 72 ຂໍ້ 3 ທີ່ໄດ້ກຳນົດໄວ້ວ່າ: ຖືເອົາການແກ້ໄຂຜົນການກວດສອບເປັນເງື່ອນໄຂ ແລະ ບ່ອນອີງໃນການຕີລາຄາ, ປະເມີນຜົນ ຫຼື ປະຕິບັດນະໂຍບາຍ ຕໍ່ການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ.

8. ຄະນະພັກ, ຄະນະນຳແຕ່ລະພາກສ່ວນຢູ່ສູນກາງ ແລະ ທ້ອງຖິ່ນ ທີ່ຢູ່ໃນເປົ້າໝາຍແຜນການກວດສອບ ໃນປີ 2025 ຈົ່ງເອົາໃຈໃສ່ຊີ້ນຳພາກສ່ວນຂັ້ນລຸ່ມຂອງຕົນ ໃຫ້ການຮ່ວມມື, ສະໜອງເອກະສານຂໍ້ມູນຕ່າງໆ ຕາມທີ່ອົງການກວດສອບມີຄວາມຕ້ອງການ; ພ້ອມກັນນັ້ນ ກໍເອົາໃຈໃສ່ຕື່ມໃນການແຕ່ງຕັ້ງຄະນະປະສານງານ ຮ່ວມເຮັດວຽກກັບອົງການກວດສອບແຫ່ງລັດໃຫ້ສຳເລັດໂດຍໄວສາມາດເຄື່ອນໄຫວຕາມແຜນການກວດສອບ, ໃນປີຜ່ານມາ ຍັງມີບາງເປົ້າໝາຍໃຊ້ເວລາແຕ່ງຕັ້ງຄະນະປະສານງານດົນເກີນໄປ (ເປັນເດືອນ) ເຮັດໃຫ້ສົ່ງຜົນກະທົບໂດຍກົງຕໍ່ການບໍລິຫານເວລາໃນການເຄື່ອນໄຫວວຽກງານລວມຂອງອົງກວດສອບແຫ່ງລັດ.

9. ຄະນະພັກ, ຄະນະນຳອົງການກວດສອບແຫ່ງລັດແລະອົງການກວດສອບປະຈຳພາກຕ້ອງເປັນເຈົ້າການຄົ້ນຄວ້າປະຕິບັດໜ້າທີ່ຂອງຕົນໃຫ້ສູງຂຶ້ນຕື່ມ, ປະຕິບັດການປະສານສົມທົບກັບອົງການກວດກາແຫ່ງລັດ ແລະ ພາກສ່ວນຕ່າງໆ ໃຫ້ກົມກຽວ, ເປັນເອກະພາບກັນ, ຮ່ວມປຶກສາຫາລື, ຮ່ວມກັນແກ້ໄຂບັນຫາຕ່າງໆ ທີ່ເຫັນວ່າມີຄວາມສັບສົນ ແລະ ສົ່ງຜົນກະທົບກວ້າງຂວາງຕໍ່ການນຳພາຂອງພັກ, ການຄຸ້ມຄອງຂອງລັດ ແລະ ກະທົບຕໍ່ການພັດທະນາສ້າງສາປະເທດບົນພື້ນຖານພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ.

**(ພາບ: ອານຸສອນ ພູມມີທອນ)**

# 3 ອົງການຈັດຕັ້ງມະຫາຊົນກະຊວງສາທາລະນະສຸກ ຢ້ຽມຊົມຫ້ອງປະຊຸມໃຫຍ່ ແລະ ຫ້ອງມູນເຊື້ອສະພາແຫ່ງຊາດ



(ສພຊ) - ຕອນສວາຍວັນທີ 19 ກຸມພານີ້, ກົມສື່ມວນຊົນຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ນຳພາ 3 ອົງການຈັດຕັ້ງມະຫາຊົນຈາກກະຊວງສາທາລະນະສຸກ ຈຳນວນ 30 ສະຫາຍ ເຊິ່ງນຳໂດຍປະທານ ແລະ ເລຂາ 3 ອົງການດັ່ງກ່າວ ຢ້ຽມຊົມຫ້ອງປະຊຸມໃຫຍ່ ແລະ ຫ້ອງມູນເຊື້ອສະພາແຫ່ງຊາດ; ການມາຢ້ຽມຊົມຄັ້ງນີ້ເປັນການສ້າງຂະບວນການຕ້ອນຮັບວັນສຳຄັນຂອງຊາດ-ຂອງພັກ ປະຈຳປີ 2025 ເຊິ່ງໄດ້ຮັບຟັງ ການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດ ຊຸດທີ I ເຖິງສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX) ເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**

# ເຍົາວະຊົນໂຮງຮຽນ ຫຼວງປະເສີດ ທັດສະນະສຶກສາຢູ່ ສພຊ ຄັ້ງທີ 2




(ສພຊ) - ຕອນເຊົ້າວັນສຸກທີ 21 ກຸມພາ 2025 ຄະນະອຳນວຍການໂຮງຮຽນຫຼວງປະເສີດ ໄດ້ນຳພາເຍົາວະຊົນ ຈຳນວນ 30 ນ້ອງ ມາທັດສະນະສຶກສາຢູ່ສະພາແຫ່ງຊາດ(ສພຊ) ເປັນຄັ້ງທີ 2 (ຄັ້ງທີ 1 ເມື່ອວັນທີ 07/02/2025) ໂດຍກົມສື່ມວນຊົນ ຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໃຫ້ການຕ້ອນຮັບແລະນຳພາຄະນະຢ້ຽມຊົມຫ້ອງປະຊຸມໃຫຍ່ແລະຫ້ອງມູນເຊື້ອສະພາແຫ່ງຊາດ.

ທັງນີ້, ກໍເພື່ອປູກຈິດສຳນຶກໃຫ້ເຍົາວະຊົນທັນວາ ໄດ້ຮູ້ເຖິງມູນເຊື້ອ, ປະຫວັດແລະຜົນງານການເຄື່ອນໄຫວຂອງທ່ານຜູ້ນຳທີ່ແສນເຄົາລົບຮັກ, ຮຽນຮູ້ແບບຢ່າງທີ່ດີເພື່ອກາຍເປັນຜູ້ສືບທອດຂອງພັກຂອງຊາດໃນອະນາຄົດ ທັງເປັນການສ້າງໃຫ້ນັກຮຽນໄດ້ຮັບຮູ້ ແລະ ມີຄວາມເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

**(ອານຸສອນ ພູມມີທອນ)**

## ຮອງປະທານ...

(ຕໍ່ຈາກໜ້າ 1)




(ສພຂ)-ວັນທີ 19-21 ກຸມພາຜ່ານມາ, ທ່ານ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະຢ້ຽມຢາມ ແລະເຮັດວຽກຢູ່ແຂວງຈຳປາສັກ ໂດຍມີຈຸດປະສົງເພື່ອເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ຊຸດທີ II ຕິດພັນກັບການລົງພົບປະຢ້ຽມຢາມຖາມຂ່າວພະນັກງານ-ລັດຖະກອນຂອງບັນດາພະແນກການ-ກົມກອງອ້ອມຂ້າງແຂວງ.

ຕອນບ່າຍວັນທີ 19 ກຸມພາ, ທ່ານ ສົມມາດ ພົລເສນາ ພ້ອມດ້ວຍຄະນະ ໂດຍສົມທົບກັບທ່ານ ສົມສີ ມະນີນິນ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງແລະພາກສ່ວນທີ່ກ່ຽວຂ້ອງຂອງ ສພຂ ໄດ້ພົບປະກັບທ່ານ ອາລຸນໄຊ ສູນນະລາດກຳມະການສູນກາງພັກ, ເຈົ້າແຂວງໆຈຳປາສັກ. ໂອກາດນີ້, ທ່ານເຈົ້າແຂວງໄດ້ກ່າວຕ້ອນຮັບແລະຕີລາຄາສູງຕໍ່ການເຄື່ອນໄຫວອັນມີເນື້ອໃນສຳຄັນພ້ອມທັງລາຍງານສະພາບການລວມໃນການຈັດຕັ້ງປະຕິບັດວຽກງານຂອງແຂວງເຊິ່ງໃນໄລຍະນີ້ກຳລັງເລັ່ງສຸມໃສ່ການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກຂັ້ນແຂວງ ເຊິ່ງດຳເນີນສຳເລັດແລ້ວ 6 ອົງຄະນະພັກແລະຈະສືບຕໍ່ໃຫ້ສຳເລັດຕາມແຜນໃນທ້າຍເດືອນມີນານີ້; ຄຽງຄູ່ກັນນັ້ນ, ຍັງສືບຕໍ່ສຸມໃສ່ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນແລະການແກ້ໄຂບັນຫາສິ່ງເສບຕິດ, ຍູ້ແຮງການປະຕິບັດມະຕິ 04 ຂອງກົມການເມືອງສູນກາງພັກວ່າດ້ວຍເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ໃຫ້ມີປະສິດທິຜົນສູງ ແລະ ຍັງສືບຕໍ່ເນັ້ນໜັກວຽກງານກໍ່ສ້າງຮາກຖານການເມືອງ, ວຽກງານແກ້ໄຂຄວາມທຸກຍາກ ແລະ ພັດທະນາຊົນນະບົດ ທີ່ເປັນວຽກສຳຄັນຂອງພັກ ກໍຄືວຽກງານຂອງສະພາປະຊາຊົນແຂວງໃນການຮັບຟັງຂໍ້ສະເໜີ ແລະ ຄຳຄິດເຫັນຂອງປະຊາຊົນ, ວຽກງານຂະບວນການແຂ່ງຂັນຮັກຊາດແລະພັດທະນາ.

ໂອກາດດຽວກັນ, ທ່ານ ສົມມາດ ພົລເສນາ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບ ພ້ອມທັງແຈ້ງຈຸດປະສົງຂອງການເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງຈຳປາສັກໃນຄັ້ງນີ້ ເພື່ອພົບປະຢ້ຽມຢາມຜູ້ມີສິດເລືອກຕັ້ງ ທັງເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂ ຈຳປາສັກ ຊຸດທີ II ທີ່ໄດ້ພິຈາລະນາຮັບຮອງເອົາຫຼາຍບັນຫາສຳຄັນທີ່ເປັນພື້ນຖານຂອງຊາດ ແລະ ຂອງທ້ອງຖິ່ນ ໃຫ້ພະນັກງານ-ລັດຖະກອນຂອງບັນດາພະແນກການ-ກົມກອງອ້ອມຂ້າງແຂວງໄດ້ຮັບຮູ້, ເຂົ້າໃຈ ແລະ ນຳໄປຈັດຕັ້ງຜັນຂະຫຍາຍໃຫ້ມີຜົນສຳເລັດ.

ຈາກນັ້ນ, ຄະນະໄດ້ເຄື່ອນໄຫວພົບປະຢ້ຽມຢາມພະນັກງານ-ລັດຖະກອນ 8 ພະແນກການຂອງແຂວງຄື: ສາທາລະນະສຸກ, ກະສິກຳ ແລະ ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂຍທາທິການ ແລະ ຂົນສົ່ງ, ອຸດສາຫະກຳແລະການຄ້າ, ແຜນການ ແລະ ການລົງທຶນ, ການເງິນ, ສຶກສາທິການ ແລະ ກິລາ ໂດຍມີທ່ານ ສົມບູນ ເຮືອງວົງສາ ຮອງເຈົ້າແຂວງພ້ອມດ້ວຍບັນດາທ່ານຫົວໜ້າພະແນກການໃຫ້ການຕ້ອນຮັບ ແລະ ເຄື່ອນໄຫວເຮັດວຽກຮ່ວມ. ໃນການພົບປະ ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງ 8 ພະ ແນກການທີ່ສາມາດເຫັນໄດ້ເຖິງຜົນສຳເລັດຂອງການຈັດຕັ້ງປະຕິບັດວຽກງານ ແລະ ຂໍ້ຄົງຄ້າງບາງດ້ານ ທີ່ບັນດາພະແນກການຈະຕ້ອງໄດ້ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດ; ໂອກາດນີ້, ຍັງໄດ້ຮັບຟັງຄຳຄິດເຫັນ, ຄຳສະເໜີຂອງພະນັກງານ-ລັດຖະກອນຫຼາຍບັນຫາທີ່ຕິດພັນກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຢູ່ທ້ອງຖິ່ນ ເປັນຕົ້ນ: ກົນໄກການຈັດຕັ້ງປະຕິບັດວຽກງານ, ການປະສານງານລະຫວ່າງຂັ້ນເທິງກັບທ້ອງຖິ່ນ, ງົບປະມານທີ່ຍັງບໍ່ພຽງພໍ ແລະ ສອດຄ່ອງກັບການຈັດຕັ້ງປະຕິບັດວຽກງານຕົວຈິງ, ບຸຄະລາກອນຍັງບໍ່ທັນພຽງພໍຕາມຄວາມຕ້ອງການຂອງໜ້າວຽກ, ການພັດທະນາທີ່ມີຜົນກະທົບໃນການຈັດຕັ້ງປະຕິບັດວຽກງານ.

ຕໍ່ກັບການລາຍງານ ແລະ ຄຳສະເໜີ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການນຳພາຂອງບັນດາພະແນກການ ທີ່ເຮັດສຳເລັດໜ້າທີ່ວິຊາສະເພາະຢ່າງໜັກແໜ້ນເຂັ້ມແຂງ ພ້ອມທັງໄດ້ເນັ້ນໜັກຫຼາຍບັນຫາໃຫ້ 8 ພະແນກການ ເອົາໃຈໃສ່ຈັດຕັ້ງປະຕິບັດດັ່ງນີ້:

1. ເພີ່ມຄວາມເອົາໃຈໃສ່ໃນການຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງໃນໄລຍະໃໝ່ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ແລະ ສືບຕໍ່ປະຕິບັດທິດທາງ, ເປົ້າໝາຍລວມ ແລະ ແຜນວຽກຈຸດສຸມຂອງລັດຖະບານ ຕາມທີ່ໄດ້ກຳນົດໄວ້ໃນມະຕິກອງປະຊຸມສະພາແຫ່ງຊາດ ໃຫ້ບັນລຸຕາມແຜນການ.

2. ສຸມໃສ່ການແກ້ໄຂບັນຫາເຄັ່ງຮ້ອນດ້ານເສດຖະກິດ-ການເງິນ ໂດຍສະເພາະແກ້ໄຂບັນຫາການເໜັງຕີງຂອງອັດຕາແລກປ່ຽນ, ການເໜັງຕີງຂອງລາຄາສິນຄ້າ, ຢັບຢັ້ງສະພາບເງິນເຟີ້ບໍ່ໃຫ້ເພີ່ມຂຶ້ນສູງ ແລະ ບັນຫາໜີ້ສິນຕ່າງປະເທດ ດ້ວຍການບັງຄັບໃຊ້ບັນດາມາດຕະການທີ່ຂັ້ນເທິງໄດ້ວາງອອກຢ່າງເຂັ້ມງວດ.

3. ຄຸ້ມຄອງການລົງທຶນຂອງລັດແລະການດຳເນີນທຸລະກິດຢູ່ທ້ອງຖິ່ນຂອງແຂວງ ໃຫ້ໂລ່ງລ່ຽນຂຶ້ນ, ຕັດຂັ້ນຂອດທີ່ອຸດຕັນອອກໃຫ້ໄດ້, ສຸມໃສ່ຕິດຕາມແກ້ໄຂການລົງທຶນທີ່ມີຜົນກະທົບຕໍ່ສະພາບແວດລ້ອມແລະຕິດຕາມ, ກວດກາປະເມີນຜົນການຈັດຕັ້ງປະຕິບັດບັນດາໂຄງການການລົງທຶນຂອງລັດ ແລະ ເອກະຊົນ ໃຫ້ມີປະສິດທິຜົນ.

4. ສູ້ຊົນສຸມໃສ່ການເກັບລາຍຮັບງົບປະມານປີ 2025 ໃຫ້ໄດ້ຕາມແຜນ ຫຼື ເກີນແຜນ, ຂະຫຍາຍຖານລາຍຮັບໃໝ່ໃຫ້ເພີ່ມຂຶ້ນ, ເກັບລາຍຮັບຈາກຖານທີ່ມີຢູ່ແລ້ວໃຫ້ຄົບຖ້ວນ, ເລັ່ງການຫັນການເກັບລາຍຮັບໃຫ້ເປັນທັນສະໄໝ ໃຫ້ກວ້າງ ແລະ ກວມເອົາຫຼາຍຂົງເຂດ ໂດຍສະເພາະການເກັບລາຍຮັບຢູ່ດ່ານ, ການເກັບລາຍຮັບຈາກຄ່າທຳນຽມ, ຄ່າບໍລິການ ແລະ ອື່ນໆ.

5. ເອົາໃຈໃສ່ພັດທະນາພື້ນຖານໂຄງລ່າງການກໍ່ສ້າງປັບປຸງເສັ້ນທາງໃຫ້ໄດ້ຄຸນນະພາບ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ ໃຫ້ສຳເລັດຕາມແຜນທີ່ກຳນົດໄວ້; ພັດທະນາລະບົບຫົດເຊິ່ງປະກອບມີຫົວງານ, ຄອງແມ່, ຄອງຊອຍ ແລະ ອື່ນໆ ໃນການເກັບກັກນ້ຳສະໜອງໃຫ້ວຽກງານການຜະລິດກະສິກຳ.

6. ເອົາໃຈໃສ່ຊຸກຍູ້ສົ່ງເສີມການຜະລິດໃຫ້ແຂງແຮງຂຶ້ນກວ່າເກົ່າ ພ້ອມທັງຄົ້ນຄວ້າປະເມີນຄືນບັນດາລາຍ ການສິນຄ້າທີ່ສາມາດຜະລິດໄດ້ເປັນຕົ້ນຝຸ່ນ, ອາຫານສັດ ຮັບປະກັນການສະໜອງ ແລະ ຊົມໃຊ້ຢູ່ພາຍໃນໃຫ້ພຽງ ພໍກັບຄວາມຕ້ອງການ ພ້ອມທັງມີກົນໄກປະສານສົມທົບລະຫວ່າງຂະແໜງກະສິກຳ ແລະ ປ່າໄມ້ ກັບຂະແໜງອຸດສາຫະກຳ ແລະ ການຄ້າ ຄົ້ນຄວ້າກຳນົດມາດຕະການຈຳກັດການນຳເຂົ້າສິນຄ້າທີ່ສາມາດຜະລິດໄດ້ຢູ່ພາຍໃນ ແລະ ຫຼຸດຜ່ອນການສົ່ງອອກວັດຖຸດິບບາງລາຍການທີ່ຍັງມີຄວາມຕ້ອງການຊົມໃຊ້ພາຍໃນ ເພື່ອຮັບປະກັນການຊົມໃຊ້ພາຍໃນໃຫ້ພຽງພໍ.

7. ສຸມໃສ່ປັບປຸງສະພາບການສຶກສາ ແລະ ກໍ່ສ້າງຊັບພະຍາກອນມະນຸດ, ສືບຕໍ່ປະຕິບັດນະໂຍບາຍ ແລະ ມາດຕະການໃນການແກ້ໄຂການປະລະການຮຽນ, ບັນຫາການຂາດແຄນຄູ, ການປະຕິບັດນະໂຍບາຍອຸດໜູນຄູອາ ສາສະໝັກ ແລະ ແພດອາສາສະໝັກ ຕາມມະຕິເລກທີ 09/ລບ ໃຫ້ເປັນຮູບປະທຳຫຼາຍຂຶ້ນເຖິງວ່າຍັງມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ກໍໃຫ້ເອົາໃຈໃສ່ລົງທຶນເຂົ້າໃນຂະແໜງສຶກສາທິການ ແລະ ສາທາລະນະສຸກ.

ວຽກງານທີ່ກ່າວມາຂ້າງເທິງນັ້ນ, ເປັນສິ່ງທ້າທາຍໃຫ້ຄະນະພັກ, ບັນດາພະແນກການ-ກົມກອງ ກໍຄືອົງການປົກຄອງແຂວງຈຳປາສັກ ຈະຕ້ອງໄດ້ເພີ່ມທະວີນຳພາບັນດາຂະແໜງການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບ ໃຫ້ມີຜົນສຳເລັດຕາມທິດທາງແຜນການ ແລະ ລະດັບຄາດໝາຍທີ່ວາງໄວ.

**(ສົມວິຈິດ ໄຊມົນຕີ)**

## ປະທານ ກກຊນ...

(ຕໍ່ຈາກໜ້າ 1)




ພົບປະທ່ານ ສອນທະນູ ທຳມະວົງ ເຈົ້າແຂວງໆບໍລິຄຳໄຊ ໃນໂອກາດທີ່ໄປເຄື່ອນໄຫວວຽກງານຢູ່ແຂວງດັ່ງກ່າວ.

ທ່ານ ຄຳແພງ ວິລະພັນ ໄດ້ແຈ້ງຈຸດປະສົງການເຄື່ອນໄຫວວຽກງານຢູ່ແຂວງບໍລິຄຳໄຊໃນຄັ້ງນີ້ແມ່ນເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ພ້ອມທັງນຳເອົາກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ນິຕິກຳໃຕ້ກົດໝາຍເຜີຍແຜ່ໃຫ້ພະນັກງານຫຼັກແຫຼ່ງຂອງແຂວງ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບເນື້ອໃນກົດໝາຍແລະນິຕິກຳໃຕ້ກົດໝາຍ; ດຳເນີນການຕິດຕາມກວດກາ, ຊຸກຍູ້ການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍແລະການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍຂອງອົງການປົກຄອງທ້ອງຖິ່ນ ແນໃສ່ສ້າງສະຕິເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນສັງຄົມໃຫ້ນັບມື້ສູງຂຶ້ນ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

ທ່ານ ສອນທະນູ ທຳມະວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການເຄື່ອນໄຫວວຽກງານຢູ່ແຂວງບໍລິຄຳໄຊຂອງປະທານກຳມາທິການກົດໝາຍ ແລະ ຄະນະ ພ້ອມທັງລາຍງານໂດຍຫຍໍ້ກ່ຽວກັບວຽກງານຈຸດສຸມຂອງແຂວງ ເປັນ ຕົ້ນການພັດທະນາເສດຖະກິດ ແລະ ວັດທະນະທຳ-ສັງຄົມ, ການຍົກລະດັບຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍລວມແລ້ວເຫັນວ່າ ເສດຖະກິດຂອງແຂວງມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ຮັບການພັດທະນາໃຫ້ດີຂຶ້ນເທື່ອລະກ້າວ.

ວັນທີ 17 ກຸມພາ, ທ່ານ ຄຳແພງ ວິລະພັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາແລະຊຸກຍູ້ວຽກງານການໂຄສະນາເຜີຍແຜ່ກົດໝາຍຢູ່ແຂວງຄຳມ່ວນ ໂດຍໄດ້ເປີດກອງປະຊຸມທີ່ສະພາປະຊາຊົນແຂວງ (ສພຂ); ເຂົ້າຮ່ວມມີທ່ານ ປອ. ແກ້ວອຸດອນ ບຸດສິງຂອນ ຮອງເຈົ້າແຂວງໆຄຳມ່ວນ, ບັນດາທ່ານຄະນະປະຈຳ ແລະ ຄະນະກຳມະການຂອງ ສພຂ, ປະທານແນວລາວສ້າງຊາດແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12, ຫົວໜ້າ/ຮອງຫົວໜ້າພະແນກການ ແລະ ອົງການຈັດຕັ້ງຂັ້ນແຂວງທີ່ກ່ຽວຂ້ອງ, ຄະນະກອງບັນຊາການ ປກຊ-ປກສ ພ້ອມດ້ວຍແຂກຖືກເຊີນ.

ທ່ານ ນາງ ບັງອອນ ໄຊຍະສິດ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ໄດ້ກ່າວຕ້ອນຮັບ ແລະ ລາຍງານໂດຍສັງເຂບກ່ຽວກັບສະພາບທີ່ຕັ້ງ ແລະ ຈຸດພິເສດຂອງແຂວງ; ຈາກນັ້ນ, ທ່ານ ຄຳແພງ ວິລະພັນ ໃນນາມປະທານກອງປະຊຸມ ໄດ້ມີຄຳເຫັນເຈາະຈີ້ມ ທັງໃຫ້ທິດຊີ້ນຳຕໍ່ພາກສ່ວນທີ່ກ່ຽວຂ້ອງທີ່ຈະລາຍງານກ່ຽວກັບວຽກງານການໂຄສະນາເຜີຍແຜ່ກົດໝາຍ. ກອງປະຊຸມໄດ້ຮັບຟັງການລາຍງານຈາກ 9 ພາກສ່ວນຂອງແຂວງຄື: ພະແນກຍຸຕິທຳ, ພະແນກພາຍໃນ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກອງບັນຊາການປ້ອງກັນຄວາມສະຫງົບ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ເຊິ່ງຍົກໃຫ້ເຫັນດ້ານດີ ແລະ ຂໍ້ຄົງຄ້າງການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ; ຜູ້ເຂົ້າຮ່ວມໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຊຸກຍູ້ວຽກງານໂຄສະນາເຜີຍແຜ່ກົດໝາຍ ໃຫ້ໄດ້ຮັບການໂຄສະນາເຜີຍແຜ່ຢ່າງກວ້າງຂວາງ ເພື່ອສ້າງສະຕິເຄົາລົບປະຕິບັດກົດໝາຍ ແລະ ຫຼຸດຜ່ອນການລະເມີດກົດໝາຍ.

ທ່ານ ຄຳແພງ ວິລະພັນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ, ຕີລາຄາສູງຕໍ່ຜົນງານທີ່ບັນດາພະແນກການ ແລະ ພາກສ່ວນທີ່ກ່ຽວຂ້ອງຍາດມາໄດ້; ພ້ອມດຽວກັນນັ້ນ, ກໍໄດ້ເນັ້ນຕື່ມບາງບັນຫາໃຫ້ເອົາໃຈໃສ່ດັ່ງນີ້:

1. ບັນດາພະແນກການ, ອົງການຂອງແຂວງຄຳມ່ວນເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດວຽກງານການໂຄສະນາເຜີຍແຜ່ກົດໝາຍຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ກວ້າງຂວາງ, ເລິກເຊິ່ງ ແລະ ທົ່ວເຖິງ;

2. ຄະນະພັກ, ຄະນະນຳຂອງແຂວງຄຳມ່ວນ ຄົ້ນຄວ້າພິຈາລະນາສະໜອງງົບປະມານ, ພາຫະນະ ແລະ ບຸຄະລາກອນ ເພື່ອຊຸກຍູ້ເຮັດໃຫ້ວຽກງານໂຄສະນາເຜີຍແຜ່ກົດໝາຍມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ;

3. ອົງການປົກຄອງແຂວງ ສືບຕໍ່ຈັດຕັ້ງປະຕິບັດຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 01/ຄປຈ, ລົງວັນທີ 3 ມັງກອນ 2024 ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ແລ້ວລາຍງານໃຫ້ສາຍຕັ້ງຂອງຕົນ ເພື່ອສະຫຼຸບສັງລວມໃຫ້ລັດຖະບານລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX.

**(ໂສລະຢ່າ ແລະ ເອື້ອ ມະໂນສິງ)**

# ຖອດຖອນບົດຮຽນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຫຼວງນ້ຳທາ

(ສພຂ) - ຕອນບ່າຍວັນທີ 21 ກຸມພານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ໄດ້ມີກອງປະຊຸມສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຊຸດທີ II ພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ນາງ ອຸ່ນຫຼ້າ ອ້ຽງລໍລາດ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ອ່ອນຈັນ ຄຳພາວົງຮອງເຈົ້າແຂວງໆຫຼວງນ້ຳທາ; ມີສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນແຂວງ (ສສຂ), ພະແນກການທີ່ກ່ຽວຂ້ອງ, ຫົວໜ້າ-ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງພາຍໃນ



ສພຂ ແລະ ອົງການປົກຄອງແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ພາຍຫຼັງຮັບຟັງການສະເໜີຮ່າງບົດສະຫຼຸບຕີລາຄາຖອດຖອນບົດຮຽນກ່ຽວກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຂ ຫຼວງນ້ຳທາ ຊຸດທີ II ເຊິ່ງຄະນະປະຈຳສະພາປະຊາຊົນແຂວງໄດ້ເອົາໃຈໃສ່ຄົ້ນຄວ້າ, ກະກຽມແຕ່ຫົວທີ, ມີຄວາມເປັນເອກະພາບຮ່ວມກັບອົງການປົກຄອງແຂວງ ແລະ ແບ່ງຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນ ໃນການກະກຽມກອງປະຊຸມ; ກອງປະຊຸມໄດ້ດຳເນີນໄປໃນຮູບແບບປົກກະຕິ, ມີພິທີເປີດ-ປິດ, ມີການຄວບຄຸມບັນຊາໂດຍປະທານກອງປະຊຸມ ເຊິ່ງຄະນະປະທານກອງປະຊຸມ ໄດ້ຈັດແບ່ງຄວາມຮັບຜິດຊອບ ແລະ ຜັດປ່ຽນກັນບັນຊາກອງປະຊຸມໃນແຕ່ລະວາລະເຮັດໃຫ້ກອງປະຊຸມສາມາດດຳເນີນໄປດ້ວຍຄວາມເປັນລະບຽບຮຽບຮ້ອຍ, ບັນຍາກາດຟົດຟື້ນ, ເສີມຂະຫຍາຍສິດປະຊາທິປະໄຕ ແລະ ຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງ; ຜູ້ແທນໄດ້ສຸມທຸກສະຕິປັນຍາໃນການຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບັນດາເນື້ອໃນຕ່າງໆ, ການສະໜອງເອກະສານ, ການລົງຄະແນນສຽງຮັບຮອງເອົາວຽກງານສຳຄັນຂອງແຂວງ, ວຽກງານຮອບດ້ານອື່ນແມ່ນມີຂໍ້ສະດວກ ແລະ ໄດ້ຮັບຜົນສຳເລັດຈົບງາມ; ຄຽງຄູ່ກັນນັ້ນ, ຍັງມີບາງບັນຫາທີ່ຕ້ອງໄດ້ເອົາໃຈໃສ່, ປັບປຸງແກ້ໄຂເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນຄັ້ງຕໍ່ໄປ ໃຫ້ດີກວ່າເກົ່າ. ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ແລກປ່ຽນບົດຮຽນ, ປະກອບຄຳຄິດເຫັນ ຕໍ່ກັບການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ເພື່ອຊອກຫາວິທີແກ້ໄຂ ເຮັດໃຫ້ກອງປະຊຸມສະໄໝສາມັນທີ່ຈະດຳເນີນຄັ້ງຕໍ່ໄປ ມີເນື້ອໃນຮັດກຸມ ແລະ ມີຄຸນນະພາບສົມບູນຂຶ້ນກວ່າເກົ່າ.

ຕອນທ້າຍ, ທ່ານ ອ່ອນຈັນ ຄຳພາວົງ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ສະພາປະຊາຊົນແຂວງ ແລະ ພາກ ສ່ວນທີ່ກ່ຽວຂ້ອງຂອງແຂວງ ທີ່ໄດ້ເອົາໃຈໃສ່ກະກຽມຮອບດ້ານ ເຫັນໄດ້ຜົນສຳເລັດຫຼາຍດ້ານ, ສະແດງຄວາມຊົມເຊີຍສສຊແລະສສຂ ທີ່ໄດ້ສຸມໃສ່ປະກອບຄຳເຫັນຢ່າງມີຄຸນນະພາບ ທັງຮຽກຮ້ອງທຸກພາກສ່ວນທີ່ກ່ຽວຂ້ອງ ໃຫ້ມີຄວາມຮັບຜິດຊອບສູງ, ເພີ່ມຂອດປະສານງານກະກຽມ ແລະ ດຳເນີນກອງປະຊຸມ ສພຂ ໃຫ້ມີຄຸນນະພາບກວ່າເກົ່າ.

**(ນາງ ວັນນີ ແຝງບົວວັນ)**

# ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ





(ສພຂ) - ວັນທີ 10-11 ມັງກອນຜ່ານມາ, ທ່ານ ປອ. ສີນາວາ ສຸພານຸວົງ ລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ 3 ຈຸດ ກວມເອົາ 7 ບ້ານຂອງເມືອງຈອມເພັດ ຄື: ປາກ ຫຼົງ, ໜອງຈອງ, ຫ້ວຍຍໍ້, ນາສົ້ງ, ໂພນໂຮມ, ຫ້ວຍແຂ້ ແລະ ມ່ວງແກ້ວ ເຊິ່ງມີອຳນາດການປົກຄອງບ້ານ, ເຖົ້າແກ່ແນວໂຮມ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ເຂົ້າຮ່ວມທັງໝົດ 468 ຄົນ, ຍິງ 259 ຄົນ.

ການເຄື່ອນໄຫວຄັ້ງນີ້ ໄດ້ນຳເອົາເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ໄດ້ເຂົ້າໃຈຕໍ່ແນວທາງຂອງພັກ-ລັດ ແລະ ນຳໄປຈັດຕັ້ງຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຢູ່ທ້ອງຖິ່ນຮາກຖານເມືອງ ແລະ ບ້ານ; ໄດ້ຮັບຮູ້ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ, ລັດຖະບານ, ອົງການຕຸລາການ ແລະ ວຽກງານອື່ນໆ ທີ່ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 8. ໃນການເຄື່ອນໄຫວແຕ່ລະຈຸດນັ້ນ ໄດ້ຮັບຟັງສະພາບການພັດທະນາເສດຖະກິດ-ສັງຄົມຂອງບ້ານ ເຊິ່ງສ່ວນໃຫຍ່ແມ່ນມີອາຊີບປູກຝັງ-ລ້ຽງສັດ, ການບໍລິການແລະຄ້າຂາຍເປັນຕົ້ນຕໍ; ຄຽງຄູ່ກັນນັ້ນ ຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງປະຊາຊົນບັນດາເຜົ່າ ຕິດພັນກັບການເກັບກຳສະພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຢູ່ພາຍໃນເມືອງຈອມເພັດ.

ທ່ານ ປອ. ສີນາວາ ສຸພານຸວົງ ໄດ້ຮຽກຮ້ອງໃຫ້ອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າ ຈົ່ງມີຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນແລະກັນ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ເປັນເຈົ້າການສຶກສາອົບຮົມລູກຫຼານໃຫ້ເປັນພົນລະເມືອງດີ, ເອົາໃຈໃສ່ສ້າງເສດຖະກິດຄອບຄົວໂດຍອີງໃສ່ເງື່ອນໄຂທ່າແຮງຂອງບ້ານ ເປັນຕົ້ນແມ່ນຜະລິດສິນຄ້າກະສິກຳທີ່ເມືອງສົ່ງເສີມ ແລະ ມີຕະຫຼາດຮອງຮັບ; ສ່ວນຄຳສະເໜີນັ້ນ, ບາງຄຳສະເໜີແມ່ນ ໄດ້ຊີ້ແຈງກັບທີ່, ມີບາງຄຳສະເໜີ ຈະໄດ້ສັງລວມສົ່ງໃຫ້ພາກສ່ວນກ່ຽວຂ້ອງຂອງແຂວງ ແລະ ເມືອງ ເພື່ອລົງກວດກາ ແລະ ແກ້ໄຂໃຫ້ທັນຕາມສະພາບການ.

ໂອກາດດັ່ງກ່າວ, ທ່ານຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມ ແລະ ເງິນຈຳນວນໜຶ່ງ ມອບໃຫ້ພໍ່ແມ່ປະຊາຊົນ ແລະ ຄູ-ອາຈານ ເພື່ອປະກອບສ່ວນຊຸກຍູ້ການພັດທະນາເສດຖະກິດຄອບຄົວ.

ວັນທີ 5-7 ກຸມພາຜ່ານມາ, ທ່ານ ສົມພອນ ສີອຸດົມພັນ ກຳມະການພັກແຂວງ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 6, ຮອງປະທານສະພາປະຊາຊົນແຂວງ (ສພຂ) ໄດ້ເຄື່ອນໄຫວພົບປະໂອ້ລົມຜູ້ມີສິດເລືອກຕັ້ງຢູ່ 5 ບ້ານ ກຸ່ມສິບຊົງ ເມືອງງອຍ ຄື: ຫາດຂາມ, ສິບຊົງ, ໂພນຊະນະ, ຫາດສາ ແລະ ປາກລວງ ມີຜູ້ເຂົ້າຮ່ວມທັງໝົດ 496 ຄົນ, ຍິງ 188 ຄົນ.

ການພົບປະໂອ້ລົມແມ່ນໄດ້ນຳເອົາຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂ ຫຼວງພະບາງ ຊຸດທີ II ເປັນຕົ້ນແມ່ນບັນດາບັນຫາສຳຄັນພື້ນຖານຂອງຊາດແລະຂອງແຂວງ ທີ່ໄດ້ ພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມ ເຜີຍແຜ່ໃຫ້ບັນດາຜູ້ເຂົ້າຮ່ວມໄດ້ຮັບຮູ້, ເຂົ້າໃຈ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ; ພ້ອມດຽວກັນນັ້ນ, ໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີກ່ຽວກັບສະພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຢູ່ເມືອງ ເຊິ່ງສ່ວນຫຼາຍແມ່ນສະເໜີໃຫ້ລັດຖະບານຊ່ວຍທະລຸເສັ້ນທາງເຂົ້າ ໄປຫາບ້ານຫາດສາ ແລະ ປາກລວງ, ຂະຫຍາຍຕາຂ່າຍໄຟຟ້າແຕ່ບ້ານຫາດສາຫາບ້ານປາກລວງ, ຂະຫຍາຍສັນຍານອິນເຕີເນັດ, ບັນຫາເຮືອນ ແລະ ຫໍປະຊຸມບ້ານເປ່ເພຍ້ອນສະພາບດິນຍຸບ, ແລະ ສະເໜີຫ້ອງການກ່ຽວຂ້ອງຂອງເມືອງ ຊອກທຶນຮອນໃນການລົງຊຸກຍູ້ສົ່ງເສີມປະຊາຊາຊົນໃນການປູກ-ການລ້ຽງ ໃຫ້ມີເຕັກນິກ ແລະ ໄດ້ຮັບຜົນຜະລິດສູງ.

ທ່ານ ສົມພອນ ສີອຸດົມພັນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຄະນະພັກ, ອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນທີ່ມີຄວາມສາມັກຄີ, ມີຄວາມເອກະພາບຕໍ່ແນວທາງນະໂຍບາຍຂອງພັກ-ລັດ ກໍຄືການປະຕິບັດຕາມການຈັດສັນທີ່ຢູ່ອາໄສທີ່ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳອູ 3; ຮຽກຮ້ອງໃຫ້ພໍ່ແມ່ປະຊາຊົນ ຈົ່ງພ້ອມກັນເອົາໃຈ ໃສ່ຮັກສາຄວາມສະຫງົບພາຍໃນບ້ານ, ເປັນເຈົ້າການແກ້ໄຂປາກົດການຫຍໍ້ທໍ້ທີ່ເກີດຂຶ້ນ ເປັນຕົ້ນແມ່ນບັນຫາຢາເສບຕິດ, ເອົາໃຈໃສ່ພັດທະນາເສດຖະກິດຄອບຄົວສ້າງລາຍຮັບເຂົ້າຄອບຄົວ ດ້ວຍການຜະລິດສິນຄ້າກະສິກຳທີ່ບ້ານມີທ່າແຮງ ແລະ ມູນເຊື້ອຢູ່ແລ້ວ ໃຫ້ມີການຂະຫຍາຍຕົວເພື່ອຮັບປະກັນໃຫ້ຊີວິດການເປັນຢູ່ດີຂຶ້ນເລື້ອຍໆ.



ວັນທີ 19-21 ກຸມພານີ້, ທ່ານ ປອ. ກໍລະກັນ ພົມມະວົງ ກຳມະການປະຈຳກຳມາທິການວັດທະນະທຳ-ສັງ ຄົມ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ 5 ຈຸດຂອງເມືອງນານ ລວມມີ: ສຳນັກງານປົກຄອງເມືອງ, ບ້ານທ່າລີ, ບ້ານທົ່ງຈະເລີນ, ບ້ານປາກຄອນ ແລະ ບ້ານແກ້ວມະນີ ໂດຍມີຄະນະປະຈຳພັກ ແລະ ກຳມະການພັກເມືອງ, ພະນັກງານ-ລັດຖະກອນ, ອຳນາດການປົກຄອງບ້ານ, ເຖົ້າແກ່ແນວໂຮມ ຕະຫຼອດຮອດພໍ່ແມ່ປະຊາຊົນ ເຂົ້າຮ່ວມທັງ ໝົດ 366 ຄົນ, ຍິງ 231 ຄົນ.

ການພົບປະຄັ້ງນີ້ ໄດ້ນຳເອົາຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ເປັນຕົ້ນ ແມ່ນບັນຫາສຳຄັນຂອງຊາດ ແລະ ວຽກງານອື່ນໆທີ່ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາ ເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ຮັບຮູ້ເຂົ້າໃຈ ແລະ ນຳໄປ ຈັດຕັ້ງປະຕິບັດເຂົ້າສູ່ວຽກງານຕົວຈິງຢູ່ທ້ອງຖິ່ນຮາກຖານ. ໃນແຕ່ລະຈຸດ ໄດ້ຮັບຟັງສະພາບການພັດທະນາເສດຖະກິດ-ສັງຄົມພາຍໃນບ້ານ ເຊິ່ງແຕ່ລະບ້ານ ສ່ວນຫຼາຍມີອາຊີບການບໍລິການຄ້າຂາຍ, ປູກຝັງ-ລ້ຽງສັດ ເປັນຕົ້ນຕໍ; ຄຽງຄູ່ກັນນັ້ນ ຍັງໄດ້ຮັບຟັງຄຳຄິດເຫັນແລະຄຳສະເໜີຂອງພໍ່ແມ່ປະຊາຊົນອີກດ້ວຍ.

**(ອານຸນ ຈັນທະມາໄລ, ຄຳດີ ພັນທະລີ, ວຽນ ດວງເງິນ)**

# ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ໂຄງການໄຟຟ້າພະລັງງານລົມ ສະຫວັນ I




(ສພຂ) - ວັນທີ 21 ກຸມພາຜ່ານມາ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ນຳໂດຍທ່ານ ຄຳຜັນ ຄູນສະຫວັນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ທ່ານ ທອງໄສ ອິນທິແສງ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໂຄງການໄຟຟ້າພະລັງງານລົມ ສະຫວັນ I ຢູ່ທີ່ເມືອງນອງ ແລະ ເມືອງພິນ.

ການເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານຈາກຄະນະນຳເມືອງພິນ, ຄະນະນຳເມືອງນອງ, ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ພະແນກການທີ່ກ່ຽວຂ້ອງຂອງແຂວງ ແລະ ຄະນະຮັບຜິດຊອບໂຄງການ ເຊິ່ງໄດ້ຍົກໃຫ້ເຫັນຜົນງານດ້ານດີ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດວຽກງານໄລຍະຜ່ານມາ; ຈາກນັ້ນ, ທ່ານ ຄຳຜັນ ຄູນສະຫວັນ ພ້ອມດ້ວຍຄະນະຕິດຕາມ ໄດ້ພ້ອມກັນແລກປ່ຽນຄຳຄິດ-ຄຳເຫັນ ແລະ ມີຄຳຊັກຖາມເຈາະຈີ້ມທີ່ມີຄວາມສົນໃຈໂດຍກົງຕໍ່ກັບພະແນກການທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນຮອບດ້ານນຳໄປຄົ້ນຄວ້າຊຸກຍູ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ປະສົບຜົນສຳເລັດຕາມແຜນການທີ່ວາງໄວ້.

ຄະນະໄດ້ສືບຕໍ່ລົງຕິດຕາມກວດກາຕົວຈິງຢູ່ພາກສະໜາມ ໂດຍໄດ້ຮັບຟັງການລາຍງານຄວາມຄືບໜ້າ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດວຽກງານຂອງໂຄງການໄຟຟ້າພະລັງງານລົມ ສະຫວັນ I ທີ່ຕັ້ງຢູ່ເມືອງພິນ ຂອງບໍລິສັດ ພະລັງງານລົມ ສະຫວັນ I ຈຳກັດຜູ້ດຽວ ຈາກເຈົ້າຂອງໂຄງການດັ່ງກ່າວໂດຍສັງເຂບວ່າ: ກຳລັງຕິດຕັ້ງທັງໝົດ 495 MW (ຈຳນວນເສົາກັງຫັນ 80 ຕົ້ນ, ຕົ້ນລະ 6 MW ແລະ 6,25 MW), ຜະລິດພະລັງງານສະ ເລ່ຍໄດ້ 1,403.63 GWh/ປີ, ຈະຈັດຕັ້ງປະຕິບັດຢູ່ 2 ໄລຍະ ເຊິ່ງໄລຍະທີ 1 ຈະພັດທະນາໃນກຳລັງການຕິດຕັ້ງ 300 MW (ກັງຫັນ 48 ຕົ້ນ) ແລະ ໄລຍະທີ 2 ຈະພັດທະນາໃນກຳລັງການຕິດຕັ້ງ 195 MW (ກັງຫັນ 32 ຕົ້ນ), ເປັນກັງຫັນແກນນອນ ມີຄວາມສູງຈາກພື້ນຫາສູນກາງຂອງກັງຫັນ 130 ແມັດ, ເສັ້ນຜ່າສູນກາງຂອງວົງໃບພັດ 171 ແມັດ, ຄວາມໄວລົມສູງສຸດ 11.2 ແມັດ/ວິນາທີ, ສາຍສົ່ງແຮງດັນ 220 KV, ຍາວປະມານ 52 ກິໂລແມັດ ຈາກ Switchyard ຫາຊາຍແດນລາວ-ຫວຽດນາມ ແລະ ສົ່ງຕໍ່ໄປຍັງສະຖານີ Lao Bao ຂອງຫວຽດນາມ, ໃຊ້ເວລາກໍ່ສ້າງປະມານ 1 ປີ ແລະ ແຜນ COD ຂອງໂຄງການໄລຍະທີ 1 ໃນເດືອນ 12/2025 ແລະ ປີ 2027 ສຳລັບໂຄງການໄລຍະທີ 2, ມູນຄ່າຂອງໂຄງການທັງໝົດ ປະມານ 768.39 ລ້ານໂດລາສະຫະລັດ ເຊິ່ງມູນຄ່າໂຄງການໄລຍະທີ 1 ແມ່ນ 478.49 ລ້ານໂດລາ, ອາຍຸສຳປະທານ 25 ປີ; ຖ້າຫາກໂຄງການດັ່ງກ່າວສຳເລັດຈະເປັນການສ້າງເງື່ອນໄຂອັນດີໃນການປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ກໍຄືການພັດທະນາເສດຖະກິດ-ສັງຄົມ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນໃນທ້ອງຖິ່ນ ແລະ ເຂດໃກ້ຄຽງອີກດ້ວຍ.

**(ນາງ ຄອນສະຫວັນ ເມກສະຫວັນ)**

# ທາບທາມລະດົມຄຳເຫັນໃສ່ 2 ຮ່າງກົດໝາຍ



(ສພຂ) - ຕອນເຊົ້າວັນທີ 18 ກຸມພານີ້ ທີ່ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດກອງປະຊຸມລະດົມຄຳຄິດເຫັນໃສ່ຮ່າງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແລະຮ່າງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ໂດຍການເປັນປະທານຂອງທ່ານ ນາງ ສູນໄຖ ໄຊຍະແສງ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ; ມີບັນດາທ່ານຄະນະປະຈຳ, ຮອງປະທານຄະນະກຳມະການ, ຄະນະເລຂາທິການ ພ້ອມດ້ວຍພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ກໍເພື່ອຄົ້ນຄວ້າຢ່າງເລິກເຊິ່ງບົນພື້ນຖານຄວາມເອກະພາບຕາມແບບສອບຖາມຂອງຮ່າງກົດໝາຍທັງສອງສະບັບ, ຮັບປະກັນເນື້ອໃນຂອງການປັບປຸງກົດໝາຍ ມີຄວາມອຸດົມສົມບູນ, ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສາມາດນຳເຂົ້າຜ່ານກອງປະຊຸມສະພາແຫ່ງຊາດຕາມກຳນົດເວລາ; ແນໃສ່ຮັບປະກັນການປະຕິບັດແນວທາງຂອງພັກ-ນະໂຍບາຍຂອງລັດແຕ່ລະໄລຍະ; ປັບປຸງ ແລະ ສ້າງອີງການປົກຄອງທ້ອງຖິ່ນໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ໂປ່ງໃສ ແລະ ເປັນລະບົບໃນທົ່ວປະເທດ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນຮຸ່ງເຮືອງສີວິໄລ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີໂດຍຜູ້ຕາງໜ້າຄະນະຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ 2 ສະບັບ, ປະທານກອງປະຊຸມໄດ້ເຈາະຈີ້ມຕໍ່ບາງເນື້ອໃນ ເພື່ອເປັນຈຸດສຸມໃນການປະກອບຄຳເຫັນ; ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນຢ່າງເປັນຂະບວນຟົດຟື້ນ, ມີຈຸດສຸມ ແລະ ຄວາມຮັບຜິດຊອບສູງ ສະແດງອອກໃນການປະກອບຄຳເຫັນຕາມການເຈາະຈີ້ມຂອງປະທານກອງປະຊຸມ, ມີຄຳເຫັນຕໍ່ບັນຫາອື່ນທີ່ເຫັນວ່າການກຳນົດຍັງບໍ່ທັນສອດຄ່ອງ ແລະ ບໍ່ແທດເໝາະກັບຕົວຈິງ, ບັນຫາທີ່ບໍ່ທັນຈະແຈ້ງກໍໄດ້ຕັ້ງຄຳຖາມ ໃຫ້ຜູ້ຮັບຜິດຊອບຊີ້ແຈງ ແລະ ອະທິບາຍເພີ່ມຕື່ມ.

**(ກິລຳພົນ ພົມມະຈັນ)**




## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ທາລະນະລັດ ອາແຊກໄບຊານ ພາຍໃຕ້ການເປັນປະທານຂອງທ່ານ ນາງ ຊາຮິບາ ກາຟາໂຣວາ (Sahiba Gafarova) ປະທານສະພາແຫ່ງຊາດອາແຊກໄບຊານ ທັງເປັນປະທານ APA ໂດຍມີຄະນະຜູ້ແທນເຂົ້າຮ່ວມທັງໝົດ 289 ທ່ານ ຈາກ 27 ປະເທດ ທີ່ເປັນສະມາຊິກ ແລະ ລັດຖະສະພາສັງເກດການຂອງ APA ພ້ອມດຽວກັນນັ້ນ, ຍັງມີບັນອົງການຈັດຕັ້ງສາກົນທີ່ເປັນຄູ່ຮ່ວມຂອງ APA ຈຳນວນ 8 ພາກສ່ວນ ເຂົ້າຮ່ວມ.

ກອງປະຊຸມໄດ້ດຳເນີນພາຍໃຕ້ຫົວຂໍ້: "ບົດບາດຂອງການທູດລັດຖະສະພາ ໃນການສົ່ງເສີມການຮ່ວມມືແບບຫຼາຍຝ່າຍໃນອາຊີ" ເຊິ່ງຄະນະຜູ້ແທນໄດ້ເອົາໃຈໃສ່ປຶກສາຫາລື ແລະ ແລກປ່ຽນສົນທະນາກັນທີ່ເປັນການເນັ້ນໜັກເຖິງການເຮັດໜ້າທີ່ຂອງລັດຖະສະພາໃນການຊຸກຍູ້ການຮ່ວມມືກັນເພື່ອແກ້ໄຂບັນຫາທ້າທາຍຕ່າງໆທີ່ພວມເກີດຂຶ້ນໃນພາກພື້ນ ແລະ ສົ່ງເສີມການຮ່ວມມືກັນເພື່ອການພັດທະນາໃນອະນາຄົດ; ພ້ອມດຽວກັນນັ້ນ, ຄະນະຜູ້ແທນຍັງໄດ້ເຂົ້າຮ່ວມກອງປະຊຸມຄະນະບໍລິຫານງານ ແລະ ກອງປະຊຸມກຳມາທິການຕາມຂົງເຂດວຽກງານຕ່າງໆຂອງ APA.

ໃນກອງປະຊຸມໃຫຍ່ຄັ້ງນີ້, ທ່ານ ພອນສານ ວິໄລເມົ້ງ ໄດ້ກ່າວປາໄສໃນກອງປະຊຸມໃຫຍ່ຄົບຄະນະ ໂດຍຍົກໃຫ້ເຫັນເຖິງສະພາບການຂອງພາກພື້ນ ແລະ ຂອງໂລກ ທີ່ພວມຜັນແປໄປຢ່າງສະຫຼັບຊັບຊ້ອນ ແລະ ມີຄວາມທ້າທາຍຫຼາຍຢ່າງອັນເນື່ອງມາຈາກບັນຫາທາງດ້ານເສດຖະກິດ-ການເງິນ, ໄພພິບັດທາງທຳມະຊາດ, ການປະທະກັນດ້ວຍກຳລັງປະກອບອາວຸດໃນຫຼາຍພາກພື້ນ, ສົງຄາມການຄ້າ ແລະ ມາດຕະການບັງຄັບຝ່າຍດຽວຂອງບາງປະເທດມະຫາອຳນາດທີ່ສົ່ງຜົນກະທົບຕໍ່ສັນຕິພາບ, ການຮ່ວມມືເພື່ອການພັດທະນາ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. ທ່ານໄດ້ຕີລາຄາສູງຕໍ່ບົດບາດຂອງ APA ທີ່ມີຄວາມພະຍາຍາມໃນການສະໜັບສະໜູນການສ້າງຄວາມຈະເລີນຮຸ່ງເຮືອງໃນອາຊີ ໂດຍຜ່ານການຮ່ວມມືເຊິ່ງກັນແລະກັນ; ພ້ອມທັງຍົກໃຫ້ເຫັນເຖິງການຈັດຕັ້ງປະຕິບັດແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ຢ່າງສະເໝີຕົ້ນສະເໝີປາຍ ຂອງ ສປປລາວ ແລະ ການຈັດຕັ້ງປະຕິບັດວຽກງານການທູດລັດຖະສະພາຂອງສະພາແຫ່ງຊາດລາວ ທີ່ໄດ້ເອົາໃຈໃສ່ເຂົ້າຮ່ວມການເຄື່ອນໄຫວໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນ: ສະຫະພັນລັດຖະສະພາສາກົນ (IPU), ສະມັດຊາລັດຖະສະພາອາຊີ (APA), ສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ (APF) ແລະ ອື່ນໆ ໂດຍສະເພາະໃນປີ 2024 ຜ່ານມາ, ລະຫວ່າງທີ່ ສປປລາວ ໄດ້ຮັບກຽດເປັນປະທານໝູນວຽນອາຊຽນ, ສະພາແຫ່ງຊາດລາວ ກໍໄດ້ຮັບກຽດເປັນປະທານກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ພາຍໃຕ້ຫົວຂໍ້: "ບົດບາດຂອງລັດຖະສະພາໃນການສົ່ງເສີມການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມຂອງອາຊຽນ" ດ້ວຍຜົນສຳເລັດຢ່າງຈົບງາມ. ພ້ອມດຽວກັນນັ້ນ, ທ່ານໄດ້ຮຽກຮ້ອງໃຫ້ສະມາຊິກລັດຖະສະພາ APA ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານການທູດລັດຖະສະພາ ໃນການສົ່ງເສີມການຮ່ວມມືແບບຫຼາຍຝ່າຍເພື່ອສັນຕິພາບແລະຄວາມຈະເລີນຮຸ່ງເຮືອງຮ່ວມກັນໃນພາກພື້ນ; ສົ່ງເສີມການແກ້ໄຂບັນຫາ ແລະ ຂໍ້ຂັດແຍ້ງຕ່າງໆ ດ້ວຍສັນຕິວິທີ ໂດຍຜ່ານການເຈລະຈາທີ່ສອດຄ່ອງກັບຫຼັກການ ແລະ ກົດໝາຍສາກົນ; ສົ່ງເສີມການຮ່ວມມືບົນພື້ນຖານການເຄົາລົບເຊິ່ງກັນແລະກັນ, ມີການພັດທະນາຮ່ວມກັນ ແນໃສ່ນຳເອົາຜົນປະໂຫຍດສູງສຸດມາສູ່ປະຊາຊົນໃນອາຊີ.

ໃນໂອກາດເຂົ້າຮ່ວມກອງປະຊຸມຄັ້ງນີ້, ຄະນະຜູ້ແທນລາວ ໄດ້ພົບປະສອງຝ່າຍກັບຄະນະຜູ້ແທນລັດຖະສະພາໄທ ນຳໂດຍທ່ານ ພາຣາດອນ ປຣີສານອານັນທະກຸນ ຮອງປະທານສະພາຜູ້ແທນລາດສະດອນ ເຊິ່ງໄດ້ແລກປ່ຽນປຶກສາຫາລືກັນກ່ຽວກັບການຮ່ວມມືຂອງສະພາແຫ່ງຊາດລາວແລະລັດຖະສະພາໄທ, ການແກ້ໄຂບັນຫາການຄຸ້ມຄອງແຮງງານ, ການປາບປາມອາຊະຍາກຳທາງໄຊເບີ, ຢາເສບຕິດ ແລະ ອື່ນໆ. ນອກຈາກນັ້ນ, ຍັງໄດ້ແລກປ່ຽນສົນທະນາກັບຄະນະຜູ້ແທນລັດຖະສະພາເພື່ອນມິດອື່ນໆທີ່ເຂົ້າຮ່ວມກອງປະຊຸມ.

ກອງປະຊຸມໃຫຍ່ຄັ້ງນີ້, ໄດ້ດຳເນີນໄປໃນບັນຍາກາດທີ່ສະພາບການຂອງພາກພື້ນອາຊີຍັງສືບຕໍ່ມີຄວາມເຄັ່ງຮ້ອນ ໂດຍສະເພາະແມ່ນການປະທະກັນ ແລະ ຄວາມເສຍຫາຍຢ່າງຮຸນແຮງໃນເຂດກາຊາ ເຊິ່ງກອງປະຊຸມໄດ້ເນັ້ນໜັກກ່ຽວກັບການຮ່ວມມືກັນເພື່ອໃຫ້ການຊ່ວຍເຫຼືອ ແລະ ແກ້ໄຂບັນຫາຂັດແຍ້ງດັ່ງກ່າວ. ພ້ອມດຽວກັນນັ້ນ, ຍັງໄດ້ພິຈາລະນາຮັບຮອງເອົາລັດຖະສະພາໂອມານ ເປັນສະມາຊິກສົມບູນຂອງ APA, ສະພາແຫ່ງຊາດເບລາຣຸດຊີ ເປັນລັດຖະສະພາສັງເກດການຂອງ APA; ນອກນັ້ນ, ກໍໄດ້ຮັບຮອງເອົາສະພາແຫ່ງຊາດບາເຣນເປັນປະທານ APA ໃນປີ 2026 ແລະ ລັດຖະສະພາອີຣານເປັນປະທານ APA ໃນປີ 2027 ແລະ 2028.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ /ສພຊ
ນະຄອນຫຼວງວຽງຈັນ, ວັນທີ

**"ຮ່າງ"**
**ລັດຖະທຳມະນູນ**
**ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**(ສະບັບປັບປຸງ ປີ 2025)**

## ຄຳນຳ

ນັບເປັນເວລາຫຼາຍພັນປີມາແລ້ວ ທີ່ປະຊາຊົນລາວ ບັນດາເຜົ່າໄດ້ດຳລົງຄົງຕົວ ແລະ ຂະຫຍາຍຕົວຢູ່ບົນດິນແດນ ອັນແສນຮັກແຫ່ງນີ້. ເລີ່ມແຕ່ກາງສະຕະວັດທີ ສິບສີ່ເປັນຕົ້ນມາ, ບັນພະບູລຸດຂອງພວກເຮົາ ໂດຍສະເພາະເຈົ້າຟ້າງຸ່ມໄດ້ພາປະຊາຊົນເຮົາກໍ່ຕັ້ງ ແລະ ສ້າງປະເທດລາວລ້ານຊ້າງ ໃຫ້ເປັນເອກະພາບ ແລະ ຈະເລີນຮຸ່ງເຮືອງ.

ຕັ້ງແຕ່ສະຕະວັດທີສິບແປດ ເປັນຕົ້ນມາ, ແຜ່ນດິນລາວໄດ້ຖືກບັນດາອິດທິກຳລັງພາຍນອກຈ້ອງມອງ, ແບ່ງແຍກ ແລະ ຮຸກຮານຢູ່ສະເໝີ. ປະຊາຊົນເຮົາໄດ້ພ້ອມກັນເສີມຂະຫຍາຍມູນເຊື້ອອັນພິລະອາດຫານ ບໍ່ຍອມຈຳນົນຂອງບັນພະບູລຸດ ແລະ ໄດ້ຕໍ່ສູ້ຢ່າງຕໍ່ເນື່ອງ, ໝຽວແໜ້ນ ເພື່ອກອບກູ້ເອກະລາດ, ອິດສະລະພາບ.

ນັບແຕ່ປີ 1930 ເປັນຕົ້ນມາ ພາຍໃຕ້ການນຳພາອັນຖືກຕ້ອງ ຂອງພັກກອມມູນິດອິນດູຈີນ ໃນເມື່ອກ່ອນ ແລະ ພັກປະຊາຊົນປະຕິວັດລາວໃນປັດຈຸບັນ, ປະຊາຊົນລາວບັນດາເຜົ່າ ໄດ້ດຳເນີນການຕໍ່ສູ້ອັນຫຍຸ້ງຍາກລຳບາກ, ພິລະອາດຫານ ແລະ ເຕັມໄປດ້ວຍຄວາມເສຍສະລະຈົນສາມາດທັບມ້າງແອກຄອບຄອງ, ການກົດຂີ່ຂອງພວກລ່າເມືອງຂຶ້ນ ແລະ ລະບອບສັກດີນາ ໃຫ້ພັງທະລາຍລົງຢ່າງສິ້ນເຊີງ, ປົດປ່ອຍປະເທດຊາດຢ່າງສົມບູນ, ສ້າງຕັ້ງປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975, ອັນໄດ້ໄຂສັງກາດໃໝ່, ສັງກາດທີ່ປະເທດຊາດມີເອກະລາດ ແລະ ປະຊາຊົນ ໄດ້ມີອິດສະລະພາບຢ່າງແທ້ຈິງ.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍມານີ້, ປະຊາຊົນເຮົາ ພາຍໃຕ້ການນຳພາ ຂອງພັກປະຊາຊົນປະຕິວັດລາວ ໄດ້ພ້ອມກັນປະຕິບັດສອງໜ້າທີ່ຍຸດທະສາດ ຄື ປົກປັກຮັກສາ ແລະ ສ້າງສາປະເທດຊາດ ໂດຍສະເພາະແມ່ນ ການດຳເນີນພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານ ມີຫຼັກການຂອງພັກ ເພື່ອຂຸດຄົ້ນ ແລະ ເສີມຂະຫຍາຍກຳລັງແຮງສັງລວມຂອງຊາດ ແລະ ຂອງຍຸກສະໄໝ ເຂົ້າໃນການສືບຕໍ່ສ້າງ ແລະ ບູລະນະລະບອບປະຊາທິປະໄຕປະຊາຊົນ, ເຮັດໃຫ້ປະຊາຊົນ ຮັ່ງມີ ຜາສຸກ, ປະເທດຊາດມັ່ງຄັ່ງ ເຂັ້ມແຂງ, ສັງຄົມມີ ຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ, ສ້າງປະຖົມປັດໄຈກ້າວຂຶ້ນ ສູ່ສັງຄົມນິຍົມ.

ໃນໄລຍະໃໝ່ນີ້, ຊີວິດຂອງສັງຄົມ ໄດ້ຮຽກຮ້ອງໃຫ້ລັດເຮົາຕ້ອງຫັນໄປສູ່ການຄຸ້ມຄອງລັດຄຸ້ມຄອງ ເສດຖະກິດ-ສັງຄົມ ດ້ວຍກົດໝາຍ ຍ້ອນແນວນັ້ນ ລັດຖະທຳມະນູນສະບັບທຳອິດ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈຶ່ງໄດ້ສ້າງຂຶ້ນ ແລະ ປະກາດໃຊ້ໃນວັນທີ 15 ສິງຫາ 1991. ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກເຂົ້າສູ່ລວງເລິກ ລັດຖະທຳມະນູນສະບັບປີ 1991 ຈຶ່ງໄດ້ຮັບການປັບປຸງ ໃນປີ 2003 ແລະ ສະບັບປີ 2003 ໄດ້ຮັບການປັບປຸງ ໃນປີ 2015 ເພື່ອປັບປຸງລະບົບອຳນາດແຫ່ງລັດໃຫ້ມີປະສິດທິພາບ, ສ້າງບາດລ້ຽວໃໝ່ ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ; ລັດຖະທຳມະນູນ ສະບັບປັບປຸງປີ 2025 ແນໃສ່ສືບຕໍ່ສ້າງການຫັນປ່ຽນ ຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນລະບົບອຳນາດແຫ່ງລັດ ແລະ ຍູ້ແຮງການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ.

ລັດຖະທຳມະນູນ ຂອງລະບອບປະຊາທິປະໄຕ ປະຊາຊົນ ຢູ່ປະເທດເຮົາ ໄດ້ຮັບຮູ້ຜົນງານອັນຍິ່ງໃຫຍ່ ທີ່ປະຊາຊົນ ຍາດມາໄດ້ໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາປະເທດຊາດກໍຄືພາລະກິດປ່ຽນແປງໃໝ່. ລັດຖະທຳມະນູນກຳນົດລະບອບການເມືອງ; ເສດຖະກິດ ແລະ ສັງຄົມ; ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ; ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ; ລະບົບການຈັດຕັ້ງກົງຈັກລັດ.

ລັດຖະທຳມະນູນ ແມ່ນໝາກຜົນລວມຍອດແຫ່ງສະຕິປັນຍາ ແລະ ການປະກອບຄວາມເຫັນ ຢ່າງກວ້າງຂວາງຂອງປະຊາຊົນໃນທົ່ວປະເທດ ທີ່ສ່ອງແສງຢ່າງຈະແຈ້ງເຖິງເຈດຈຳນົງອັນສູງສົ່ງ, ຍາວນານ ແລະ ຄວາມຕັດສິນໃຈອັນແຮງກ້າຂອງວົງຄະນະຍາດແຫ່ງຊາດ ທີ່ຈະພ້ອມກັນສູ້ຊົນ ເພື່ອບັນລຸຈຸດໝາຍ ສ້າງປະເທດລາວ ໃຫ້ເປັນປະເທດ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ.

## ໝວດທີ I
## ລະບອບການເມືອງ

**ມາດຕາ 1**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດເອກະລາດ, ມີອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນລວມທັງເຂດນ່ານນ້ຳ ແລະ ນ່ານຟ້າ; ເປັນປະເທດເອກະພາບຂອງທຸກຊົນເຜົ່າ ທີ່ຕັດແຍກອອກຈາກກັນບໍ່ໄດ້.

**ມາດຕາ 2**

ລັດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນລັດປະຊາທິປະໄຕ ປະຊາຊົນ. ອຳນາດທັງໝົດເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ ຊຶ່ງປະກອບດ້ວຍບັນດາຊັ້ນຄົນຢູ່ໃນສັງຄົມ ໂດຍແມ່ນກຳມະກອນ, ກະສິກອນ ແລະ ນັກຮຽນຮູ້ປັນຍາຊົນເປັນຫຼັກແຫຼ່ງ.

**ມາດຕາ 3**

ສິດເປັນເຈົ້າປະເທດຊາດຂອງປະຊາຊົນລາວບັນດາເຜົ່າ ໄດ້ຮັບການປະຕິບັດ ແລະ ຮັບປະກັນດ້ວຍການເຄື່ອນໄຫວຂອງລະບົບການເມືອງ ຊຶ່ງມີພັກປະຊາຊົນປະຕິວັດລາວ ເປັນແກນນຳ.

**ມາດຕາ 4**

ປະຊາຊົນເປັນຜູ້ສ້າງຕັ້ງອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງຕົນ ຊຶ່ງແມ່ນ ສະພາແຫ່ງຊາດ ແລະ ສະພາປະຊາຊົນທ້ອງຖິ່ນ.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນທ້ອງຖິ່ນ ແມ່ນ ປະຕິບັດຕາມຫຼັກການທົ່ວໄປ, ສະເໝີພາບ, ໂດຍກົງ ແລະ ລົງຄະແນນສຽງປິດລັບ.

ຜູ້ປ່ອນບັດເລືອກຕັ້ງ ມີສິດສະເໜີປົດຜູ້ແທນຂອງຕົນໄດ້ ຖ້າເຫັນວ່າມີການປະພຶດຕົນບໍ່ສົມກຽດສັກສີ ແລະ ຂາດຄວາມໄວ້ວາງໃຈຈາກປະຊາຊົນ.

**ມາດຕາ 5**

ສະພາແຫ່ງຊາດ, ສະພາປະຊາຊົນທ້ອງຖິ່ນແລະທຸກອົງການຂອງລັດ ໄດ້ຮັບການຈັດຕັ້ງ ແລະ ເຄື່ອນໄຫວຕາມຫຼັກການລວມສູນປະຊາທິປະໄຕ.

**ມາດຕາ 6**

ລັດປົກປ້ອງສິດອິດສະລະພາບແລະສິດປະຊາທິປະໄຕຂອງປະຊາຊົນທີ່ບໍ່ມີໃຜຈະລ່ວງລະເມີດໄດ້. ທຸກອົງການ ແລະ ພະນັກງານຂອງລັດ ຕ້ອງໂຄສະນາ ເຜີຍແຜ່ ອົບຮົມບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການໃຫ້ປະຊາຊົນຮັບຮູ້ຢ່າງກວ້າງຂວາງ ແລະ ພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ ເພື່ອຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ.

ຫ້າມທຸກການກະທຳແບບອາດຍາສິດ, ຂົ່ມຂູ່ອັນຈະກໍ່ຄວາມເສຍຫາຍເຖິງກຽດສັກສີ, ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສົມບັດຂອງປະຊາຊົນ.

**ມາດຕາ 7 (ປັບປຸງ)**

ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ສະຫະພັນກຳມະບານລາວ, ສະຫະພັນແມ່ຍິງລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ບັນດາອົງການຈັດຕັ້ງສັງຄົມ ເປັນບ່ອນສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມຊັ້ນຄົນຂອງທຸກຊົນເຜົ່າ ເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ປົກປັກຮັກສາສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກໃນອົງການຈັດຕັ້ງຂອງຕົນ, ມີ ສິດ ແລະ ໜ້າທີ່ ຕິດຕາມ ກວດກາ ການເຄື່ອນໄຫວຂອງ ສະພາແຫ່ງຊາດ, ສະພາປະຊາຊົນທ້ອງຖິ່ນ ແລະ ສະມາຊິກຂອງສະພາດັ່ງກ່າວ ໂດຍຜ່ານຄຳສະເໜີຂອງປະຊາຊົນ.

**ມາດຕາ 8**

ລັດປະຕິບັດນະໂຍບາຍສາມັກຄີແລະສະເໝີພາບລະຫວ່າງຊົນເຜົ່າຕ່າງໆ. ທຸກຊົນເຜົ່າລ້ວນແຕ່ມີສິດປົກປັກຮັກສາ, ເສີມຂະຫຍາຍຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຕົນ ແລະ ຂອງຊາດ. ຫ້າມທຸກການກະທຳທີ່ເປັນການແບ່ງແຍກ ແລະ ການປະພຶດທີ່ເປັນການຈຳແນກລະຫວ່າງຊົນເຜົ່າ.

ລັດ ນຳໃຊ້ທຸກມາດຕະການ ເພື່ອຂະຫຍາຍ ແລະ ຍົກລະດັບເສດຖະກິດ-ສັງຄົມ ຂອງທຸກຊົນເຜົ່າໃຫ້ສູງຂຶ້ນ.

**ມາດຕາ 9 (ປັບປຸງ)**

ລັດເຄົາລົບແລະປົກປ້ອງການເຄື່ອນໄຫວອັນຖືກກົດໝາຍຂອງພຸດທະສາສະນິກະຊົນ ແລະ ສາສະນິກະຊົນອື່ນ, ປຸກລະດົມສົ່ງເສີມພຣະພິກຂຸສົງ-ສາມະເນນ, ນັກບວດ, ນັກສອນສາສະໜາ ໃຫ້ເຂົ້າຮ່ວມໃນການເຄື່ອນໄຫວທີ່ເປັນປະໂຫຍດແກ່ປະເທດຊາດ ແລະ ປະຊາຊົນ.

ຫ້າມທຸກການກະທຳ ທີ່ເປັນການແບ່ງແຍກສາສະໜາ ແລະ ແບ່ງແຍກຄວາມສາມັກຄີ ຂອງປະຊາຊົນ.

**ມາດຕາ 10 (ປັບປຸງ)**

ລັດປົກຄອງ ແລະ ຄຸ້ມຄອງສັງຄົມດ້ວຍລັດຖະທຳມະນູນ ແລະ ກົດໝາຍ.

ອົງການຈັດຕັ້ງຂອງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 11 (ໃໝ່)**

ຜືນແຜ່ນດິນອັນຄົບຖ້ວນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນສິ່ງຫວງແຫນ ຊຶ່ງບໍ່ມີໃຜລ່ວງລ້ຳໄດ້.

ທຸກການກະທຳ ທີ່ເປັນການຕ້ານ ຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຄວາມເປັນເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນ, ຕ້ານພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ລ້ວນແຕ່ຖືກລົງໂທດຢ່າງເຂັ້ມງວດ.

**ມາດຕາ 12**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຕິບັດນະໂຍບາຍການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື; ຂະຫຍາຍສາຍພົວພັນ ແລະ ການຮ່ວມມືກັບທຸກປະເທດ ບົນຫຼັກການຢູ່ຮ່ວມກັນໂດຍສັນຕິ, ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນ ອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະໜັບສະໜູນການຕໍ່ສູ້ຂອງປະຊາຊົນໃນໂລກ ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

## ໝວດທີ II
## ລະບອບເສດຖະກິດ ແລະ ສັງຄົມ

**ມາດຕາ 13 (ປັບປຸງ)**

ເສດຖະກິດແຫ່ງຊາດ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ຊຶ່ງປະກອບດ້ວຍຫຼາຍພາກສ່ວນເສດຖະກິດ, ຫຼາຍຮູບການກຳມະສິດທີ່ຄົງຕົວຢ່າງຍາວນານ ມີຄວາມສະເໝີພາບ, ທັງແຂ່ງຂັນແລະຮ່ວມມືກັນ ພາຍໃຕ້ກົດໝາຍ ບົນພື້ນຖານການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ສົ່ງເສີມເສດຖະກິດພູມປັນຍາ ທີ່ມີເອກະລັກສະເພາະ, ເຊື່ອມໂຍງເສດຖະກິດ ກັບພາກພື້ນ ແລະ ສາກົນ ເພື່ອຮັບປະກັນໃຫ້ເສດຖະກິດແຫ່ງຊາດ ມີການຂະຫຍາຍຕົວ ຢ່າງຕໍ່ເນື່ອງໝັ້ນທ່ຽງ, ມີຄວາມກົມກຽວກັບການພັດທະນາສັງຄົມ ແລະ ເປັນມິດກັບສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ ເພື່ອຍົກລະດັບຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈ ຂອງປະຊາຊົນໃຫ້ສູງຂຶ້ນ.

**ມາດຕາ 14 (ປັບປຸງ)**

ລັດ ສົ່ງເສີມ ທຸກພາກສ່ວນເສດຖະກິດພາຍໃນປະເທດ ລົງທຶນເຂົ້າໃນ ການຜະລິດ, ທຸລະກິດ, ການບໍລິການ, ການນຳໃຊ້ວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ປະກອບສ່ວນເຂົ້າໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ເຮັດໃຫ້ເສດຖະກິດແຫ່ງຊາດເຕີບໃຫຍ່ເຂັ້ມແຂງ.

ອ່ານຕໍ່ໜ້າ 7

## ຮ່າງລັດຖະທຳມະນູນ...

(ຕໍ່ຈາກໜ້າ 6)

**ມາດຕາ 15 (ປັບປຸງ)**

ລັດ ສົ່ງເສີມ ການລົງທຶນຂອງຕ່າງປະເທດ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສ້າງສະພາບແວດລ້ອມ ອຳນວຍຄວາມສະດວກໃຫ້ແກ່ການນຳເອົາ ທຶນ, ເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນ ມິດກັບສິ່ງແວດລ້ອມ, ນະວັດຕະກຳ ແລະ ການຄຸ້ມຄອງທີ່ກ້າວໜ້າເຂົ້າສູ່ຂະບວນການຜະລິດ, ທຸລະກິດແລະການບໍລິການ.

ຊັບສົມບັດ ແລະ ທຶນ ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ລົງທຶນ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ ຈະບໍ່ຖືກເກັບເກນ, ບໍ່ຖືກຍຶດ ຫຼື ໂອນເປັນຂອງລັດ.

**ມາດຕາ 16**

ລັດ ປົກປ້ອງ ແລະ ເສີມຂະຫຍາຍບັນດາຮູບການກຳມະສິດຂອງລັດ, ລວມໝູ່, ເອກະເທດ, ເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 17 (ປັບປຸງ)**

ລັດ ປົກປ້ອງ ສິດກ່ຽວກັບກຳມະສິດ (ສິດຄອບຄອງ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດຊີ້ຂາດ) ແລະ ສິດສືບທອດຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ລວມໝູ່ ແລະ ສັງຄົມ ຕາມກົດໝາຍ.

ທີ່ດິນ, ແຮ່ທາດ, ນ້ຳ, ອາກາດ, ປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ, ສັດປ່າ, ຊັບພະຍາກອນທຳມະຊາດອື່ນ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດ ເປັນຕົວແທນ ແລະ ຄຸ້ມຄອງ ຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ຕາມກົດໝາຍ.

**ມາດຕາ 18**

ລັດ ຄຸ້ມຄອງເສດຖະກິດ ຕາມກົນໄກເສດຖະກິດຕະຫຼາດທີ່ມີການດັດສົມດ້ວຍກົດໝາຍ, ເພີ່ມທະວີບົດບາດຄຸ້ມຄອງມະຫາພາກຂອງຂະແໜງການສູນກາງ, ປະຕິບັດຫຼັກການສົມທົບການຄຸ້ມຄອງລວມສູນ ເປັນເອກະພາບ ຂອງຂະແໜງການສູນກາງ ກັບການແບ່ງຄວາມຮັບຜິດຊອບ ໃຫ້ທ້ອງຖິ່ນ ຕາມກົດໝາຍ.

**ມາດຕາ 19 (ປັບປຸງ)**

ລັດສົ່ງເສີມການປົກປັກຮັກສາຊັບພະຍາກອນທຳມະຊາດ, ຟື້ນຟູສິ່ງແວດລ້ອມທີ່ຖືກທຳລາຍ, ຊຸດໂຊມ ແລະ ພັດທະນາ ໃຫ້ອຸດົມສົມບູນ ແລະ ຍືນຍົງ.

ທຸກອົງການຈັດຕັ້ງ ແລະ ພົນລະເມືອງທຸກຄົນ ຕ້ອງປົກປັກຮັກສາ, ອະນຸລັກຊີວະນານາພັນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງ.

**ມາດຕາ 20**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຕິບັດນະໂຍບາຍເປີດກວ້າງ ການພົວພັນຮ່ວມມືເສດຖະກິດກັບຕ່າງປະເທດ ໂດຍນຳໃຊ້ຮູບການສຳພັນເສດຖະກິດ ແບບຫຼາຍທິດ, ຫຼາຍຝ່າຍ, ຫຼາຍຮູບແບບ ບົນຫຼັກການເຄົາລົບເອກະລາດ, ອະທິປະໄຕຂອງກັນ ແລະ ກັນ, ສະເໝີພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 21 (ປັບປຸງ)**

ລັດໃຫ້ຄວາມສຳຄັນແກ່ການພັດທະນາເສດຖະກິດຕິດພັນກັບການພັດທະນາ ວັດທະນະທຳ, ສັງຄົມ ແລະ ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ ໂດຍໃຫ້ບຸລິມະສິດແກ່ການພັດທະນາຊັບພະຍາກອນມະນຸດ.

**ມາດຕາ 22**

ລັດ ເອົາໃຈໃສ່ປະຕິບັດນະໂຍບາຍການສຶກສາແຫ່ງຊາດ ເພື່ອສ້າງຄົນລາວໃຫ້ເປັນ ພົນລະເມືອງດີ, ມີຄຸນສົມບັດ, ມີຄວາມຮູ້, ຄວາມສາມາດ ແລະ ມີວິຊາຊີບ.

ລັດແລະທົ່ວສັງຄົມຕັ້ງໜ້າພັດທະນາການສຶກສາແຫ່ງຊາດໃຫ້ມີຄຸນນະພາບ, ສ້າງໂອກາດ ແລະ ເງື່ອນໄຂໃຫ້ປະຊາຊົນ ໄດ້ຮັບການສຶກສາຢ່າງທົ່ວເຖິງ ໂດຍສະເພາະປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກ, ຊົນເຜົ່າ, ແມ່ຍິງ, ເດັກນ້ອຍ, ຜູ້ດ້ອຍໂອກາດ ແລະ ຜູ້ພິການ.

ລັດ ສົ່ງເສີມ ແລະ ຊຸກຍູ້ໃຫ້ເອກະຊົນລົງທຶນເຂົ້າໃນການພັດທະນາການສຶກສາແຫ່ງຊາດ ຕາມກົດໝາຍ.

**ມາດຕາ 23 (ປັບປຸງ)**

ລັດ ສົ່ງເສີມ ການອະນຸລັກ, ປົກປັກຮັກສາ ແລະ ເສີມຂະຫຍາຍ ວັດທະນະທຳທີ່ເປັນເອກະລັກ, ເປັນມູນເຊື້ອອັນດີງາມຂອງຊາດ ແລະ ຂອງຊົນເຜົ່າ, ສົມທົບກັບການຮັບເອົາວັດທະນະທຳອັນຍອດຍິ່ງ ຂອງມວນມະນຸດ ຢ່າງມີການເລືອກເຟັ້ນ.

ລັດ ສົ່ງເສີມການເຄື່ອນໄຫວວັດທະນະທຳ, ສິລະປະ, ວັນນະຄະດີ, ການປະດິດຄິດແຕ່ງ, ຄຸ້ມຄອງ ແລະ ປົກປັກຮັກສາມໍລະດົກທາງດ້ານ ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ, ບູລະນະ, ປະຕິສັງຂອນ ວັດຖຸບູຮານ ແລະ ປູຊະນີຍະສະຖານ.

ລັດ ເອົາໃຈໃສ່ປັບປຸງ, ຂະຫຍາຍວຽກງານສື່ມວນຊົນ ເພື່ອຮັບໃຊ້ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ຫ້າມ ທຸກການເຄື່ອນໄຫວດ້ານວັດທະນະທຳ ຫຼື ນຳໃຊ້ສື່ມວນຊົນ ເພື່ອກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງຊາດ, ທຳລາຍ ຮີດຄອງປະເພນີ, ວັດທະນະທຳ ອັນດີງາມ ຫຼື ກຽດສັກສີຂອງຄົນລາວ.

**ມາດຕາ 24 (ປັບປຸງ)**

ລັດ ເອົາໃຈໃສ່ສົ່ງເສີມ ສະຕິປັນຍາ, ຫົວຄິດປະດິດສ້າງ ໃນວຽກງານຄົ້ນຄວ້າ, ວິໄຈ ແລະ ນຳໃຊ້ ວິທະຍາສາດ ເຕັກໂນໂລຊີ, ນະວັດຕະກຳ, ປັນຍາປະດິດ, ປົກປ້ອງຊັບສິນທາງປັນຍາ ໄປຄຽງຄູ່ກັບ ການບຳລຸງ ແລະ ສ້າງນັກວິທະຍາສາດ ເພື່ອການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

**ມາດຕາ 25**

ລັດ ເອົາໃຈໃສ່ປັບປຸງ ແລະ ຂະຫຍາຍວຽກງານສາທາລະນະສຸກ ເພື່ອຮັກສາ ແລະ ສົ່ງເສີມສຸຂະພາບຂອງປະຊາຊົນ.

ລັດ ແລະ ສັງຄົມ ຕັ້ງໜ້າກໍ່ສ້າງ, ປັບປຸງລະບົບການກັນພະຍາດ, ປິ່ນປົວຄົນເຈັບຢ່າງທົ່ວເຖິງ ແລະ ມີຄຸນນະພາບ, ສ້າງເງື່ອນໄຂໃຫ້ປະຊາຊົນທຸກຄົນໄດ້ຮັບການເບິ່ງແຍງດ້ານສຸຂະພາບ ໂດຍສະເພາະແມ່ ແລະ ເດັກນ້ອຍ, ປະຊາຊົນຜູ້ທຸກຍາກ ແລະ ຜູ້ຢູ່ເຂດຫ່າງໄກສອກຫຼີກ ເພື່ອໃຫ້ທຸກຄົນມີສຸຂະພາບດີ.

ລັດ ສົ່ງເສີມ ແລະ ຊຸກຍູ້ໃຫ້ເອກະຊົນລົງທຶນໃນການບໍລິການດ້ານສາທາລະນະສຸກ ທີ່ກ້າວໜ້າ ແລະ ທັນສະໄໝ.

ຫ້າມ ທຸກການບໍລິການດ້ານສາທາລະນະສຸກ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 26**

ລັດ ແລະ ສັງຄົມ ເອົາໃຈໃສ່ຊຸກຍູ້, ສົ່ງເສີມ ແລະ ລົງທຶນໃນການກິລາ-ກາຍຍະກຳຂອງມະຫາຊົນ ນັບທັງປະເພດກິລາ ທີ່ເປັນມູນເຊື້ອອັນດີງາມຂອງເຜົ່າຕ່າງໆ ແລະ ກິລາສາກົນ ເພື່ອຍົກລະດັບຄວາມສາມາດດ້ານການກິລາໃຫ້ສູງຂຶ້ນ, ເສີມສ້າງກຳລັງ ແລະ ສຸຂະພາບຂອງປະຊາຊົນ.

**ມາດຕາ 27**

ລັດ ແລະ ສັງຄົມ ເອົາໃຈໃສ່ພັດທະນາສີມືແຮງງານ; ຍົກສູງວິໄນແຮງງານ, ສົ່ງເສີມວິຊາຊີບ ແລະ ວຽກເຮັດງານທຳຂອງປະຊາຊົນ; ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານ.

**ມາດຕາ 28**

ລັດ ແລະ ສັງຄົມ ເອົາໃຈໃສ່ປະຕິບັດນະໂຍບາຍສະຫວັດດີການສັງຄົມເປັນຢ່າງດີ ໂດຍສະເພາະຕໍ່ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ພະນັກງານບຳນານ, ຜູ້ເສຍອົງຄະ, ຄອບຄົວ ຜູ້ເສຍສະລະຊີວິດ ເພື່ອພາລະກິດປະຕິວັດ ແລະ ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ.

**ມາດຕາ 29**

ລັດ, ສັງຄົມ ແລະ ຄອບຄົວ ເອົາໃຈໃສ່ປະຕິບັດນະໂຍບາຍພັດທະນາ ແລະ ສົ່ງເສີມ ຄວາມກ້າວໜ້າຂອງແມ່ຍິງ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງ ແມ່ຍິງ ແລະ ເດັກນ້ອຍ.

**ມາດຕາ 30**

ລັດ ແລະ ສັງຄົມ ສົ່ງເສີມ, ເປີດກວ້າງ ແລະ ພັດທະນາການທ່ອງທ່ຽວທາງດ້ານວັດທະນະທຳ,ປະຫວັດສາດ ແລະ ທຳມະຊາດໃຫ້ກາຍເປັນອຸດສາຫະກຳທ່ອງທ່ຽວ ທີ່ມີເອກະລັກສະເພາະ ແລະ ເປັນຂະແໜງເສດຖະກິດທີ່ສຳຄັນຂອງຊາດ.

ຫ້າມການທ່ອງທ່ຽວ ທີ່ຈະສ້າງຄວາມເສື່ອມເສຍຕໍ່ວັດທະນະທຳອັນດີງາມຂອງຊາດ ຫຼື ເປັນການລະເມີດ ກົດໝາຍ.

### ໝວດທີ III
### ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

**ມາດຕາ 31**

ລັດ ປະຕິບັດ ແນວທາງ, ນະໂຍບາຍປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ສ້າງ ແລະ ປັບປຸງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ໜັກແໜ້ນ, ເຂັ້ມແຂງ, ມີແບບແຜນທັນສະໄໝ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ, ມີຄວາມສາມາດປະຕິບັດໜ້າທີ່ປົກປັກຮັກສາໝາກຜົນຂອງການປະຕິວັດ, ຊີວິດ, ຊັບສິນ ແລະ ການອອກແຮງງານຂອງປະຊາຊົນ, ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃຫ້ໝັ້ນຄົງ ເຂັ້ມແຂງ.

**ມາດຕາ 32 (ປັບປຸງ)**

ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນພາລະກິດທົ່ວປວງຊົນ, ເປັນພັນທະ ແລະ ໜ້າທີ່ຂອງທຸກການຈັດຕັ້ງ ແລະ ພົນລະເມືອງລາວທຸກຄົນ ໂດຍແມ່ນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບເປັນຫຼັກແຫຼ່ງ ໃນການປົກປັກຮັກສາຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ; ປົກປັກຮັກສາຊີວິດ ແລະ ຊັບສິນຂອງປະຊາຊົນ, ຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງລະບອບປະຊາທິປະໄຕ ປະຊາຊົນ.

ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງສົມທົບແໜ້ນກັບການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 33**

ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງເອົາໃຈໃສ່ປັບປຸງແລະກໍ່ສ້າງຕົນເອງໃຫ້ເຕີບໃຫຍ່ເຂັ້ມແຂງ, ເຊີດຊູຄວາມຈົງຮັກພັກດີຕໍ່ປະເທດຊາດ, ເປັນກຳລັງປະກອບອາວຸດຂອງ ປະຊາຊົນ ທີ່ມີທາດແທ້ປະຕິວັດ, ລະບຽບວິໄນເຂັ້ມງວດ ແລະ ມີແບບແຜນທັນສະໄໝ, ມີຄວາມສາມາດໃນການສູ້ຮົບສູງ; ເປັນກຳລັງຫຼັກແຫຼ່ງໃນການຮັກສາຄວາມໝັ້ນຄົງຂອງປະເທດຊາດ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ເຂົ້າຮ່ວມຕ້ານ, ສະກັດກັ້ນ ແລະ ແກ້ໄຂໄພພິບັດ.

ລັດ ເອົາໃຈໃສ່ພັດທະນາພື້ນຖານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປະກອບວັດຖຸປະກອນ,ເຕັກນິກ, ເຕັກໂນໂລຊີ, ພາຫະນະ, ເຄື່ອງມື ແລະ ຍົກລະດັບຄວາມຮູ້, ຄວາມສາມາດ, ວິຊາສະເພາະ, ສິນລະ ປະຍຸດ ແລະ ຍຸດທະວິທີຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃຫ້ສູງຂຶ້ນ.

**ມາດຕາ 34**

ລັດ ແລະ ສັງຄົມ ເອົາໃຈໃສ່ປະຕິບັດນະໂຍບາຍ, ເບິ່ງແຍງຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ;ປະຕິບັດນະໂຍບາຍແນວຫຼັງຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອເພີ່ມທະວີ ຄວາມສາມາດໃນການປະຕິບັດໜ້າທີ່ ປົກປັກຮັກສາປະເທດຊາດ ແລະ ຮັກສາຄວາມສະຫງົບຂອງ ສັງຄົມ.

ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບຕ້ອງຍົກສູງຈິດໃຈເພິ່ງຕົນເອງ, ກຸ້ມຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຕົນ ແລະ ເຂົ້າຮ່ວມໃນການສ້າງສາ ແລະ ພັດທະນາປະເທດຊາດ.

### ໝວດທີ IV
### ສິດ ແລະ ພັນທະພື້ນຖານຂອງພົນລະເມືອງ

**ມາດຕາ 35**

ພົນລະເມືອງລາວ ແມ່ນ ຜູ້ມີສັນຊາດລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ລັດ ຮັບຮູ້, ເຄົາລົບ, ປົກປ້ອງ ແລະ ຮັບປະກັນສິດທິມະນຸດ ແລະ ສິດທິພື້ນຖານຂອງພົນລະເມືອງ ຕາມກົດໝາຍ.

**ມາດຕາ 36**

ພົນລະເມືອງລາວ ໂດຍບໍ່ຈຳແນກຍິງ-ຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

**ມາຕາ 37**

ພົນລະເມືອງລາວຜູ້ມີອາຍຸແຕ່ສິບແປດປີຂຶ້ນໄປ ມີສິດປ່ອນບັດເລືອກຕັ້ງ ແລະ ຜູ້ມີອາຍຸ ແຕ່ຊາວເອັດປີຂຶ້ນໄປ ມີສິດສະໝັກຮັບເລືອກຕັ້ງ, ເວັ້ນເສຍແຕ່ຜູ້ເປັນບ້າ, ເສຍຈິດ ແລະ ຜູ້ຖືກສານຕັດສິນລົງ ໂທດຕັດອິດສະລະພາບ, ປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ.

**ມາດຕາ 38**

ພົນລະເມືອງລາວ ຍິງ-ຊາຍ ມີສິດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ.

ອ່ານຕໍ່ສະບັບໜ້າ...




# ຄວນຈັດການແຂ່ງຂັນມອບລາງວັນດີເດັ່ນ

**# ທິດດີ**

ເມື່ອເວົ້າເຖິງ Social media ຫຼື ສື່ອອນລາຍແລ້ວ ກໍຕ້ອງຍອມຮັບວ່າພວກສ້າງເລື່ອງ (Content) ເປັນຕົ້ນແມ່ນ: TikToker, Youtuber ມີຫຼາຍສົມຄວນ ໃນນັ້ນມີພວກຈ່າວຂາຍສິນຄ້າກວມຫຼາຍກວ່າເພິ່ນ, ຮອງລົງມາແມ່ນພວກເລາະທ່ຽວຕາມແຫຼ່ງທ່ອງທ່ຽວ, ພວກເລາະຕາມບ້ານເຮືອນປະຊາຊົນບັນດາເຜົ່າ ເພື່ອຊ່ວຍເຫຼືອພວກທຸກຍາກຂາດເຂີນ ພວກນີ້ເຂົ້າໄປເຖິງທຸກມຸມທຸກແຈໃນທົ່ວປະເທດ ພວກເຂົາເຂົ້າເຖິງການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ແລ້ວສ່ອງແສງຮີດຄອງປະເພນີອັນງົດງາມຂອງເຜົ່າຕ່າງໆໃນປະເທດເຮົາ ມີທັງຄົນລາວ ແລະ ຄົນຕ່າງປະເທດ ໂດຍສະເພາະແມ່ນຄົນໄທກວມສ່ວນຫຼາຍ.

ຜ່ານການຕິດຕາມກໍຍອມຮັບວ່າການເຄື່ອນໄຫວ ມີທັງຂໍ້ດີ ແລະ ຂໍ້ຄົງຄ້າງ ໂດຍສະເພາະການໃຊ້ສັບພາສາປົນເປ, ຄຳສັບຊອດກະຈາ ບາງເທື່ອກໍເບິ່ງຟັງບໍ່ອອກ Content ນັ້ນແມ່ນພາສາລາວຫຼືພາສາໄທ, ບໍ່ວ່າພາສາຝຣັ່ງ, ອັງກິດ ແຮງໄປກັນໃຫຍ່; ເວົ້າເລື່ອງຮີດຄອງປະເພນີ ກໍມີບາງອັນທີ່ຫຼ້າຫຼັງບໍ່ເໝາະສົມເຊັ່ນວ່າ: ເລື່ອງອາຫານການກິນ ກິນດິບກິນແດງ, ໄຊໂຕສັດທີ່ເຂົາກິນເປັນອາຫານ, ເລື່ອງຄອບຄົວເຮືອນຊານ (ມີຫຼາຍລູກຫຼາຍເມຍ) ທີ່ເຮັ່ງຮ້າຍກວ່ານັ້ນ ແມ່ນພວກຂາຍສິນຄ້າບຳລຸງກຳລັງເລື່ອງເພດສຳພັນ ແມ່ນເວົ້າໂຈ່ງແຈ້ງບໍ່ອາຍຟ້າທ້າດິນແທ້ໆ ເຫັນແລ້ວກໍໜັງຄີງລຸກ... ຕໍ່ປາກົດການນີ້ ຫຼາຍຄົນຕ່າງບອກວ່າ ພວກເຮົາຄຸ້ມຄອງບໍ່ຮັດກຸມ, ບໍ່ມີການໂຄສະນາສຶກສາອົບຮົມພວກສ້າງເລື່ອງທັງຫຼາຍວ່າ ອັນໃດເໝາະອັນໃດຄວນປ່ອຍປະລະເລີຍ ເບິ່ງຄືວ່າປ່ອຍເສລີບີຣົ່ວ ເອົາແຕ່ໃຜຊິເຮັດຕາມລຳພັງໃຈ.

ເບິ່ງແລ້ວ ຟັງແລ້ວ ພວກພະນັກງານບຳນານບອກວ່າຫົດຫູ່ໃຈ ບໍ່ຄາດຄິດວ່າສັງຄົມເຮົາຈະເປັນ ໄປເຖິງຂັ້ນນີ້, ເມື່ອເປັນເຊັ່ນນີ້ພວກເພິ່ນກໍຕັ້ງບັນຫາວ່າ ພວກເຮົາຄວນຈັດໃຫ້ມີການຈັດຕັ້ງແຂ່ງຂັນມອບລາງວັນແກ່ຜູ້ເຄື່ອນໄຫວດີເດັ່ນເປັນແບບຢ່າງ ເພື່ອຍ້ອງຍໍສັນລະເສີນນັບທັງຄົນລາວ ແລະ ຄົນຕ່າງປະເທດ, ຖ້າເຮັດມັນຈະເປັນແບບຢ່າງໃຫ້ແກ່ຜູ້ກຳລັງເຄື່ອນໄຫວ ທັງເປັນການຕິຖອຍ ແລະ ລົງວິໄນກ່າວເຕືອນພວກເຄື່ອນໄຫວເກີນເລີຍ.

ແລ້ວໃຜຊິເຮັດ? ນີ້ແມ່ນບັ້ງເລກທີ່ຕັ້ງຂຶ້ນເຖິງພາກສ່ວນກ່ຽວຂ້ອງວ່າຈະເຮັດ ຫຼື ຈະປ່ອຍໃຫ້ມັນເປັນໄປຕາມກະແສ? ຫວັ່ນໄຫວໝາກຫົວໃຈແທ້ເດ?







## ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

4. ຕ້ອງແບ່ງປັນພະນັກງານໃຫ້ຖືກ: ຄືວ່າໃນບ່ອນສຳຄັນຂອງເມືອງໃຫຍ່ ໃຫ້ສົ່ງພະນັກງານຜູ້ເຮັດວຽກຕິດແທດກັບປະຊາຊົນໄປເຮັດວຽກ. ເພາະວ່າເຂົາເຈົ້າແມ່ນຄົນຜູ້ທີ່ອອກຈາກປະຊາຊົນ, ມີຫົວຄິດປະດິດສ້າງ, ມີສະໝອງດີ, ມີຈິດໃຈທຸ່ມທ່ຽງ, ຕ້ອງໃຊ້ຄົນໃຫ້ຖືກບ່ອນ ແລະ ຖືກວຽກ.

5. ຕ້ອງຊ່ວຍເຫຼືອພະນັກງານຢ່າງຖືກຕ້ອງ: ຕ້ອງມີຈິດໃຈຮັກແພງຊ່ວຍເຫຼືອ ແລະ ນຳພາພະນັກງານຊ່ວຍເຂົາເຈົ້າແກ້ໄຂດັດແປງບ່ອນຜິດພາດ, ຍ້ອງຍໍສັນລະເສີນເຂົາເຈົ້າເຮັດວຽກໄດ້ຜົນດີ ແລະ ຕ້ອງໝັ່ນກວດກາເບິ່ງພະນັກງານເລື້ອຍໆ.

6. ຕ້ອງປົກປັກຮັກສາພະນັກງານ: ໃນບ່ອນທີ່ຕ້ອງເຮັດວຽກທາງລັບນັ້ນ ຖ້າຫາກຈຳເປັນກໍສົ່ງພະນັກງານໃໝ່ໄປເຮັດວຽກແທນພະນັກງານເກົ່າ ແລະ ໃຫ້ພະນັກງານເກົ່າໄປເຮັດວຽກບ່ອນອື່ນ. ຕ້ອງຊອກທຸກວິທີຮັກສາຄວາມລັບໃຫ້ພະນັກງານເພື່ອບໍ່ໃຫ້ພະນັກງານເຖິງແກ່ອັນຕະລາຍ.

**3. ການຄັດເລືອກພະນັກງານ:**

ໃນການຈະເອົາຄົນເຂົ້າເປັນພະນັກງານ ຕ້ອງມີການຄັດເລືອກດັ່ງລຸ່ມນີ້:

ກ) ຄັດເລືອກເອົາຄົນທີ່ສະແດງໃຫ້ເຫັນວ່າສັດຊື່ບໍລິສັດ ແລະ ຂະຫຍັນຫ້າວຫັນໃນວຽກການ, ໃນເວລາຕໍ່ສູ້.

ຂ) ຄັດເລືອກເອົາຄົນທີ່ເຄີຍຕິດຕໍ່ໃກ້ຊິດກັບປະຊາຊົນ ເຂົ້າໃຈປະຊາຊົນ, ເອົາໃຈໃສ່ເບິ່ງແຍງຜົນປະໂຫຍດຂອງປະຊາຊົນຢູ່ເລື້ອຍໆ. ເຮັດແນວນັ້ນປະຊາຊົນຈຶ່ງຈະເຊື່ອຖືພະນັກງານ ແລະ ຮັບເອົາພະນັກງານນັ້ນວ່າເປັນຜູ້ນຳພາເຂົາເຈົ້າ.

ອ່ານຕໍ່ສະບັບໜ້າ...



## ສະຫະພັນແມ່ຍິງ...

(ຕໍ່ຈາກໜ້າ 1)

(ສພຊ)-ເມື່ອວັນທີ 18 ກຸມພາຜ່ານມາ, ສະຫະພັນແມ່ຍິງສະພາແຫ່ງຊາດ (ສພຊ), ຄອບຄົວການນຳຂັ້ນສູງ ແລະ ຄະນະກອງທຶນຊ່ວຍເຫຼືອສັງຄົມຂອງ ສພຊ ນຳພາໂດຍສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ແລະ ສະຫາຍ ນາງ ມະນີວັນ ເຍຍປາວເຮີ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ປະທານສະຫະພັນແມ່ຍິງສະພາແຫ່ງຊາດ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ມອບເຄື່ອງອຸປະໂພກ-ບໍລິໂພກ ໃຫ້ກອງພົນໃຫຍ່ 497 ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 76 ປີ ທີ່ຫາກໍຜ່ານໄປ ເຊິ່ງມີສະຫາຍ ພົຕ. ໄພວັນ ຈັນທະພົມມາ ຄະນະພັກກະຊວງປ້ອງກັນປະເທດ, ຮອງຫົວໜ້າກົມໃຫຍ່ການເມືອງກອງທັບ, ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນກອງທັບ, ສະຫາຍ ພົຈວ. ນາງ ໄພວອນ ອິນທະບຸດ ຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ຫົວໜ້າຫ້ອງການສະຫະພັນແມ່ຍິງກອງທັບ, ສະຫາຍ ພັອ. ພອນໄຊ ບໍລະດິມ ເລຂາຄະນະພັກ, ຫົວໜ້າການເມືອງກອງພົນໃຫຍ່ 497 ພ້ອມດ້ວຍຄະນະພັກ-ຄະນະບັນຊາ ແລະ ພະນັກງານ-ນັກຮົບທົ່ວກອງພົນ ໃຫ້ການຕ້ອນຮັບ.

ສະຫາຍ ພັອ. ພອນໄຊ ບໍລະດິມ ໄດ້ຕາງໜ້າຄະນະພັກ-ຄະນະບັນຊາກອງພົນ ກ່າວສະແດງຄວາມດີໃຈ ແລະ ຕີລາຄາສູງຕໍ່ການນຳພາຄະນະມາຢ້ຽມຢາມກອງພົນໃຫຍ່ໃນຄັ້ງນີ້ ແລະ ລາຍງານຫຍໍ້ສະພາບການເຄື່ອນໄຫວຂອງກອງພົນໃນໄລຍະຜ່ານມາແລະ ໄດ້ສະແດງຄວາມຂອບໃຈແກ່ສະຫາຍຮອງປະທານສະພາແຫ່ງຊາດ ແລະ ຄະນະຜູ້ແທນມາຈາກສະພາແຫ່ງຊາດ ທີ່ມີຄວາມເປັນຫ່ວງເປັນໄຍຕໍ່ພະນັກງານ-ນັກຮົບກອງພົນໃຫຍ່497 ທີ່ໄດ້ມາມອບເຄື່ອງບໍລິໂພກ ແລະ ເງິນຈຳນວນໜຶ່ງ ໃຫ້ແກ່ກອງພົນໃຫຍ່ ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການຊຸກຍູ້ພະນັກງານ-ນັກຮົບໃນກົມກອງ ໃນການປະຕິບັດໜ້າທີ່ການເມືອງຂອງຕົນ ທັງໃຫ້ຄຳໝັ້ນສັນຍາວ່າ ຈະນຳເອົາເຄື່ອງຈຳນວນດັ່ງກ່າວ ໄປແຈກຢາຍໃຫ້ພະນັກງານ-ນັກຮົບຢ່າງທົ່ວເຖິງ ແລະໝູນໃຊ້ໃຫ້ເກີດປະໂຫຍດສູງສຸດ.

ໂອກາດນີ້, ສະຫາຍ ປອ. ນາງສູນທອນ ໄຊຍະຈັກ ມີການໂອ້ລົມບັນດານາຍ ແລະ ພົນທະຫານຂອງກອງພົນໃຫຍ່ 497 ໂດຍໄດ້ຕີລາຄາສູງຕໍ່ບັນດາຜົນງານ, ຜົນສຳເລັດຮອບດ້ານຂອງກອງພົນໃຫຍ່ໃນຕະຫຼອດໄລຍະຜ່ານມາ ອັນເປັນການປະກອບສ່ວນສຳຄັນໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ໄດ້ຍ້ອງຍໍຊົມເຊີຍຕໍ່ການປະຕິບັດໜ້າທີ່ຢ່າງຫ້າວຫັນ ສົມເປັນຮົ້ວທີ່ດີຂອງຊາດ; ສະຫາຍຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມອວຍພອນໃຫ້ກອງພົນໃຫຍ່ 497 ຈົ່ງຍາດໄດ້ຜົນສຳເລັດໃຫຍ່ຫຼວງກວ່າເກົ່າໃນການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງກອງພົນໃຫຍ່. ໃນໂອກາດມາຢ້ຽມຢາມຄັ້ງນີ້, ສະຫາຍຮອງປະທານສະພາແຫ່ງຊາດ ໄດ້ກ່າວມອບເຄື່ອງເຊິ່ງລວມມີເຄື່ອງອຸປະໂພກ-ບໍລິໂພກ ແລະ ເຄື່ອງກິລາ ລວມມູນຄ່າ 50 ລ້ານກີບ ແລະ ເງິນສົດ 50 ລ້ານກີບ.

ຈາກນັ້ນ, ຄະນະໄດ້ຮັບຊົມການສະແດງທາງດ້ານຍຸດທະວິທີວິຊາສະເພາະ ແລະ ການຫັດກາຍມວຍຕ່າງໆຂອງເຫຼົ່າຮົບຕິພິເສດ.

ພາຍຫຼັງສຳເລັດການຢ້ຽມຢາມກອງພົນໃຫຍ່497, ຄະນະຈາກສະພາແຫ່ງຊາດ ຍັງໄດ້ນຳເອົາເງິນສົດ 50 ລ້ານກີບ ແລະ ເຄື່ອງໃຊ້ຈຳເປັນຈຳນວນໜຶ່ງ ໄປມອບໃຫ້ໂຮງຮຽນປະຖົມສົມບູນສີບຸນເຮືອງ ບ້ານເກີນ ເມືອງທຸລະຄົມ ແຂວງວຽງຈັນ ອີກດ້ວຍ.

ການຢ້ຽມຢາມຄັ້ງນີ້ເປັນໂອກາດອັນດີໃຫ້ແກ່ເອື້ອຍນ້ອງແມ່ຍິງສະພາແຫ່ງຊາດ ເຫັນໄດ້ການເຄື່ອນໄຫວຂອງກອງພົນໃຫຍ່497 ທັງເປັນການສ້າງຂະບວນການເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຂອງສະຫະພັນແມ່ຍິງສະພາແຫ່ງຊາດໃນຕໍ່ໜ້າ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**





## ສຸຂະພາບທາງໂຣດາ

# 6 ວິທີກຳຈັດກິ່ນຕີນເໝັນດ້ວຍຕົນເອງ

# ຄັດໂດຍ: ທອມສະນິດ



**1. ແຊ່ຕີນໃນນ້ຳອຸ່ນປະສົມເກືອ.**

ເປັນວິທີການທີ່ງ່າຍ ແຕ່ໄດ້ຜົນດີເກີນຄາດ ກໍຄືຕົ້ມນ້ຳໃຫ້ຟົດ ແລ້ວປະໄວ້ໃຫ້ເຢັນ ຈາກນັ້ນໃສ່ເກືອລົງໄປໃນນ້ຳທີ່ໄດ້ກຽມໄວ້ ແລ້ວກໍເອົາຕີນລົງໄປແຊ່ປະມານ 15-20 ນາທີ, ເຮັດຄືເກົ່າທຸກມື້ຈົນຄົບ 1 ເດືອນ ອາການຕີນເໝັນຈະທຸເລົາລົງໄດ້ ກິ່ນຈະໜ້ອຍລົງ ຫຼືອາດຈະຫາຍໄປເລີຍກໍໄດ້.

**2. ແຊ່ໃນນ້ຳຢາເດກຕອນ**

ຫາຊື້ນ້ຳຢາຂ້າເຊື້ອເດກຕອນທີ່ເປັນກ່ອງສີສົ້ມໆມາໂດຍເອົາປະສົມກັບນ້ຳໃນຖັງຫຼືຊາມທີ່ກຽມໄວ້ ເວລາແຊ່ກໍໃຫ້ເອົາແປງຖູເຮັດຄວາມສະອາດໄປພ້ອມ ໂດຍສະເພາະບໍລິເວນເລັບກັບງ່າມນິ້ວຕີນຕ້ອງຖູເປັນພິເສດ ເພາະວ່າເຊື້ອແບກເຕີເຣຍຈະຢູ່ໃນບໍລິເວນນີ້ຫຼາຍກວ່າໝູ່, ເຮັດແບບນີ້ທຸກມື້ກ່ອນເຂົ້ານອນຈະຊ່ວຍໃຫ້ເຊົາເໝັນໄດ້ຢ່າງແນ່ນອນ.

**3. ແຊ່ໃນນ້ຳຢາບ້ວນປາກ**

ເປັນອີກໜຶ່ງສູດໃນການແຊ່ຕີນ ເອົານ້ຳຢາບ້ວນປາກເທລົງປະສົມກັບນ້ຳປະມານ 2 ຝາ ແລ້ວກໍແຊ່ຕີນລົງໄປ (ດົນປານໃດກໍໄດ້ ແລ້ວແຕ່ມີເວລາ) ໃນນ້ຳຢາບ້ວນປາກຈະມີໂຕຢາທີ່ໃຊ້ກຳຈັດເຊື້ອແບກເຕີເຣຍ ຖ້າແຊ່ເປັນປະຈຳກໍຈະຊ່ວຍແກ້ບັນຫາຕີນເໝັນໄດ້ດີເຊັ່ນກັນ.

**4. ຖູດ້ວຍຫີນສົ້ມ**

ໃນເວລາອາບນ້ຳໃຫ້ເອົາຫີນສົ້ມຖູໃຫ້ທົ່ວ ທັງຝາຕີນ, ງ່າມຕີນ ແລະ ຫຼັງຕີນ ເປັນໂຕຊ່ວຍທີ່ດີເຊັ່ນກັນ ເພາະຫີນສົ້ມມີຄຸນສົມບັດລະງັບກິ່ນຢ່າງດີ ນອກຈາກເອົາມາກຳຈັດກິ່ນເໝັນຂອງຕີນແລ້ວ ຍັງສາມາດເອົາມາກຳຈັດກິ່ນໂຕເຊັ່ນ: ກິ່ນເຕົ່າ...

**5. ເກີບ ແລະ ຖົງຕີນ**

ຊັກເກີບ ຖ້າເປັນເກີບຄັດຊູທີ່ບໍ່ສາມາດຊັກໄດ້ ກໍໃຫ້ເອົາໄປຕາກແດດເພື່ອກຳຈັດກິ່ນເໝັນ ແລະ ກໍຖືວ່າເປັນການຂ້າເຊື້ອແບກເຕີເຣຍໄປນຳ ຫຼືປ່ຽນພື້ນຮອງເກີບກໍຈະຊ່ວຍໄດ້ຫຼາຍເລີຍ ສຳລັບຖົງຕີນໃຫ້ຊັກໃຫ້ສະອາດ ຕາກແດດໃຫ້ແຫ້ງດີເຊັ່ນກັນ ຢ່າໃສ່ຖົງຕີນຄູ່ເກົ່າຊ້ຳກັນຫຼາຍໆມື້.

**6. ເບກກິ້ງໂຊດາ**

ເບກກິ້ງໂຊດາ ຈະຊ່ວຍຂ້າເຊື້ອໂຣກ ແລະ ເຮັດຄວາມສະອາດໄປພ້ອມກັນ, ເບກກິ້ງໂຊດາ ຫຼື ຜົງຟູ ຫາຊື້ໄດ້ຕາມຮ້ານຄ້າທົ່ວໄປ ລາຄາກໍບໍ່ແພງ ຈະເປັນເມັດລະອຽດມີສີຂາວໆ ທີ່ເຮົາເອົາມາເຮັດຂະໜົມເຊັ່ນ: ສາລາເປົາ, ຂະໜົມສາລີ ແລະ ອື່ນໆ...ນຳມາປະສົມໃສ່ກັບນ້ຳພໍໃຫ້ຂຸ້ນໆ ແລ້ວນຳມາທາໃຫ້ທົ່ວຕີນ ແລະ ໃຊ້ແປງຖູໃຫ້ທົ່ວທຸກມູມຂອງຕີນຈົນແນ່ໃຈວ່າສະອາດດີແລ້ວ ພຽງເທົ່ານີ້ກິ່ນທີ່ບໍ່ປະສົງກໍຈະຫາຍໄປ.



## ອາດ ກະວີລາວ

## ຊົມມາລາ

# ລູກທາດສາມປາງ

❋ ເຫັນແຕ່ມອນຜູ້ເຜີ້ງ
ຕອມເກສອນບຸບຜາ
ແມ້ງເມື່ອເດີນດັນເຂົ້າ
ພູມະລິນນົກນ້ອຍ

ຊົມກິ່ນມາລາຫອມ
ຕ່າງສີຫຼາຍເຊື້ອ
ເຊົາສອນດົມກິ່ນ
ທະຍອຍເປື້ອງເຜັ່ນມາ

❋ ບຸບຜາສັບສອດກ້ຽວ
ຊວນສະເໜຫາຮັກ
ມາໄລຍອຍພວງຮ້ອຍ
ແສນສະອອນຍິ່ງລົ້ນ

ເດີນທ່ຽວຊົມສວນ
ໄຄ່ຄວນໃຈທ້ອຍ
ລົມວອຍຫອມອ່ອນ
ສິນສ້ອຍສ່ຳສີ

❋ ຈຳປີເຂັມດອກກ້ວຍ
ຈຳປາຂາວພວມບານ
ສຸດຕະການຍາມຈ້ອງ
ມີທັງຈັນກຸຫຼາບອ້າ ເຜີຍກີບບານງ່ານ້ອຍ

ຂີນໄຂວ່ກະດັນງາ
ກິ່ງງາມມີກ້ານ
ມອງສວນບານສະພັ່ງ
ອຸລາຂ້ອຍຊື່ນຊວງ...ດອມແລ້ວ!

❋ ດວງໃຈຝັນໄຝ່ຝັ້ນ
ດອກຕາເວັນບົວບົກ
ດອກດາວເຮືອງຈີມຊ້ອນ
ດອກຮັກຊອນຮິ່ນເຮົ້າ

ກະສັນກິ່ນມາລາ
ເກດຫອມທາງເບື້ອງ
ແຊມກັນເປັນບ່ອນ
ຫາຍເສົ້າເມື່ອດົມ

❋ ປຽບດັ່ງໂສມໜໍ່ໄທ້
ອິນທະຫວາສາວລາວ
ປ່ອຍຫຼ່ອຍໂສມສະເຫຼົາເນື້ອ
ຍິງລາວສູງເກິ່ງຟ້າ ປຽບມາລາກິ່ນຟຸ້ງ

ສະເໜີກິ່ນບຸບຜາ
ທີ່ສະເໜງາມຍ້ອຍ
ງາມເຫຼືອປະເສີດຍິ່ງ
ຄຸງຊົ້ນແກ່ວພະໂຍມ...ພຸ້ນນາ!



## ຫົກຫາຍ ລະບາຍ

### (ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❋ **ກຸມພາ**ກຽມຜ່ານພົ້ນ **ມີນາ**ຍ່ອງຍາມເຢືອນ ໃນເດືອນມີຫຼາຍອຽກງານ ສຳຄັນຂອງຊາດ **8 ມີນາ**ໂລກກ້ອງກຽມສະຫຼອງກັບເບືອງບັນທຶກ **ທີ 22** ແມ່ນມື້ວັນສ້າງຕັ້ງພັກປະຊາ ທັງ **21 ມີນາ**ພໍ່າພ້ອມ ບັ້ນຮົບໃຫຍ່ທີ່ຝັງໃຈ ອິລະກ່າຫຼວງຫຼາຍ ໄພ່ປະຊາລາວຮູ້ ເປັນບົດຮຽນສອນໃຫ້ ຄົນຮຸ່ນຫຼັງຕາມໄຕ່ ຈ່າຝັງໃຈຮັບຮູ້ ສານສ້າງສືບໄປ **ບັ້ນແລ້ວ!**

❋ **ອັນ**ເວລາປ່ຽນແປງ ລະດູການປ່ຽນໄປ ຈາກ **ປາຍລະດູໜາວກ້າວສູ່ຕົ້ນລະດູຝົນ** ເລີ່ມ**ປາກົດມີຝົນຕົກ**ຢູ່ບັນດາເຂດແຂວງ**ທົ່ວປະເທດ** ອັນເວລາເຄື່ອນຍ້າຍແປປ່ຽນຕາມລະດູການ ເປັນຕຳນານກ່າວຂານ ເພີ່ນວ່າ: **"ຟ້າບໍ່ຮ້າມເດືອນສາມ ຝົນບໍ່ຮາມເດືອນສີ່ ເອັ້ນແຕ່ຍີ່ກັບຄຽງ"** ບັ້ນແລ້ວ!

## ຊວນຍິ້ມ

# ແອ່ນຕຸ້ງ

## ເລື່ອງ: ຍິບດີຄືນເງິນ

ມີຄລີນິກແຫ່ງໜຶ່ງ ຂຶ້ນປ້າຍຢ່າງທ້າທາຍວ່າ: "ປິ່ນປົວທຸກພະຍາດ ເທື່ອລະ 50 ພັນກີບ, ຖ້າປິ່ນປົວບໍ່ດີ ຍິນດີຄືນເງິນ 2 ເທົ່າ"

ລຸງສົມສົງຄິດຢາກໄດ້ເງິນເລີຍຄິດວາງແຜນ

**ທ່ານໝໍ:** ສະບາຍດີລຸງ ເປັນຫຍັງມາບໍ?

**ລຸງສົມສົງ:** ລຸງຮູ້ສຶກວ່າ ລີ້ນລຸງບໍ່ຮູ້ລົດຊາດ

**ທ່ານໝໍ:** ແມ່ນບໍ! ເອົາຄັນຊັ້ນ ແຫຍ່ລີ້ນອອກມາ, ແລ້ວທ່ານໝໍເປີດກັບຢາສີແດງພ້ອມເອົາຂີ້ໄກ່ທາລີ້ນ

**ລຸງສົມສົງ:** ແອ໊ກໆໆ!!!... ຄຸຍ ອ້າວໝໍ!!! ອັນນີ້ມັນຂີ້ໄກ່ເດ ນີ້ນະ

**ທ່ານໝໍ:** ໂອ!!! ເຊົາລະເດ, ຄ່າປິ່ນປົວ 50 ພັນກີບ

ລຸງສົມສົງຄິດແຄ້ນໃນໃຈ ຈຶ່ງຄິດວາງແຜນອີກຮອບ

**ທ່ານໝໍ:** ອ້າວລຸງ... ມື້ນີ້ເປັນຫຍັງອີກບໍ?

**ລຸງສົມສົງ:** ລັກຂ້ອຍເປັນຫຍັງບຸ ມັກຫຼົງໆລືມໆ

**ທ່ານໝໍ:** ແມ່ນຫວາຄັນຊັ້ນແຫຍ່ລີ້ນອອກ,ແລ້ວທ່ານໝໍປິ່ນໄປກຳລັງຊິເປີດກັບຢາສີແດງ

**ລຸງສົມສົງ:** ທ່ານໝໍ ກັບນັ້ນມັນໃສ່ຂີ້ໄກ່ບໍ່ແມ່ນຫວະ?

**ທ່ານໝໍ:** ຫັ້ນເດ ເຊົາແລ້ວ, ຄ່າປິ່ນປົວ 50 ພັນກີບ

**ລຸງສົມສົງ:** ອຸ໊ບະ!!!... ບັກອັນນີ້



## ຄະຕິເຕືອນໃຈ

# ດອກຫຍ້າ

ອັດສະຈັນໃຈເດີ ງູບໍ່ມີຂາ ສົງມາແລ່ນທັນ
ບົກກະທາຊຸມລີ້ ບົມບໍ່ມີ ຊ່າງມາລ້ຽງລູກໃຫຍ່ໄດ້

## ລັດຖະສະພາຕ່າງປະເທດ

# Togo ຈັດເລືອກຕັ້ງ ສະພາສູງຄັ້ງທຳອິດ




(Xinhua) - ສາທາລະນະລັດໂຕໂກ ໄດ້ຈັດການເລືອກຕັ້ງສະພາສູງເປັນຄັ້ງທຳອິດ ເມື່ອວັນເສົາທີ 15 ກຸມພາຜ່ານມາ, ເຊິ່ງເປັນບາດກ້າວທີ່ສຳຄັນສູ່ການສ້າງຕັ້ງສະພາສູງແລະການດຳເນີນງານຢ່າງຄົບຖ້ວນຂອງລະບົບສອງສະພາ ຫຼື ສະພາຄູ່ (bicameral).

ໃນປີ 2002, ໂຕໂກ ໄດ້ປັບປຸງລັດຖະທຳມະນູນ ເພື່ອນຳສະເໜີລັດຖະສະພາທີ່ມີສອງສະພາ ເຊິ່ງປະກອບດ້ວຍສະພາແຫ່ງຊາດ ແລະ ສະພາສູງ; ຢ່າງໃດກໍຕາມ, ສະພາສູງ ຍັງບໍ່ທັນໄດ້ຮັບການສ້າງຕັ້ງຂຶ້ນຈົນເຖິງປັດຈຸບັນ.

ການເລືອກຕັ້ງສະພາສູງ ຈະເລືອກເອົາສະມາຊິກ41ທ່ານ ຈາກຜູ້ສະໝັກ 92 ທ່ານ.

ອີງຕາມກົດໝາຍ, ສະພາສູງ ປະກອບດ້ວຍ 61 ທີ່ນັ່ງ ໂດຍ 41 ທີ່ນັ່ງ ຈະຖືກເລືອກຕັ້ງໂດຍສະມາຊິກສະພາສູງລະດັບພູມີພາກ ແລະ ລະດັບເທດສະບານ, ໃນຂະນະທີ່ຍັງເຫຼືອອີກ 20 ທີ່ນັ່ງ ແມ່ນຈະຖືກແຕ່ງຕັ້ງໂດຍປະທານາທິບໍດີ; ສະມາຊິກສະພາສູງ ຈະດຳລົງຕຳແໜ່ງວາລະລະ 6 ປີ ແລະ ສາມາດໄດ້ຮັບການເລືອກຕັ້ງຄືນໃໝ່.

ໂຕໂກໄດ້ຈັດການເລືອກຕັ້ງສະມາຊິກສະພາສູງລະດັບເທດສະບານ ໃນປີ 2019 ໂດຍມີສະມາຊິກ 1,527 ຄົນ; ໃນປີ 2024, ປະເທດນີ້ ໄດ້ດຳເນີນການເລືອກຕັ້ງສະມາຊິກສະພາສູງລະດັບພູມີພາກເປັນຄັ້ງທຳອິດ ໂດຍມີສະມາຊິກຈຳນວນ 179 ຄົນ.

ຄະນະກຳມະການການເລືອກຕັ້ງຂອງໂຕໂກ ປະກາດໃນວັນອາທິດທີ 16 ກຸມພາວ່າ ສະຫະພັນເພື່ອສາທາລະນະລັດ (UNIR) ເຊິ່ງເປັນພັກລັດຖະບານ ໄດ້ຮັບໄຊຊະນະໃນການເລືອກຕັ້ງສະພາສູງ ໂດຍສາມາດຍາດໄດ້ 34 ຈາກທັງໝົດ 41 ທີ່ນັ່ງທີ່ມີການເລືອກຕັ້ງ.

ການສຳຫຼວດຄວາມຄິດເຫັນຫຼ້າສຸດເຊິ່ງຖືເປັນເຫດການສຳຄັນໃນປະເທດ ຢືນຢັນເຖິງຄວາມໂດດເດັ່ນຂອງ UNIR ຫຼັງຈາກໄດ້ຮັບໄຊຊະນະໃນການເລືອກຕັ້ງສະພານິຕິບັນຍັດ (ໄດ້ 108 ຈາກທັງໝົດ 113 ທີ່ນັ່ງໃນສະພາແຫ່ງຊາດ) ແລະ ການເລືອກຕັ້ງລະດັບພູມີພາກ ເມື່ອເດືອນເມສາ 2024.

ສະພາສູງໄດ້ຖືກສ້າງຕັ້ງຂຶ້ນ ເປັນສ່ວນໜຶ່ງຂອງການປະຕິຮູບລັດຖະທຳມະນູນທີ່ໄດ້ຮັບຮອງເອົາໃນວັນທີ 6 ພຶດສະພາ 2024 ທີ່ປ່ຽນໂຕໂກໄປສູ່ລະບົບລັດຖະສະພາ. ພາຍໃຕ້ລະບົບນີ້, ຕຳແໜ່ງປະທານາທິບໍດີໃນປັດຈຸບັນ ສ່ວນໃຫຍ່ເປັນພິທີການ; ໃນຂະນະທີ່ອຳນາດບໍລິຫານແມ່ນຢູ່ໃນມືຂອງປະທານສະພາລັດຖະມົນຕີ (President of the Council of Ministers - PCM), ຜູ້ທີ່ຕ້ອງເປັນຜູ້ນຳຂອງພັກສຽງສ່ວນຫຼາຍໃນລັດຖະສະພາ.

ປະທານາທິບໍດີຖືກເລືອກຕັ້ງໂດຍລັດຖະສະພາ ໃຫ້ດຳລົງຕຳແໜ່ງພຽງວາລະດຽວເປັນເວລາ 6 ປີ.

# ຍີ່ປຸ່ນ ອະນຸມັດຮ່າງກົດໝາຍຍິງສັດສຸກເສີນ ຫຼັງຈາກການໂຈມຕີຂອງໝີເພີ່ມຂຶ້ນ



(Xinhua) - ວັນສຸກທີ 21 ກຸມພາຜ່ານມາ, ລັດຖະບານຍີ່ປຸ່ນ ໄດ້ອະນຸມັດຮ່າງກົດໝາຍສະບັບໜຶ່ງ ເພື່ອໃຫ້ອຳນາດເທດສະບານທ້ອງຖິ່ນ ສາມາດອະນຸຍາດໃຫ້ "ຍິງສຸກເສີນ" (emergency shootings) ໄດ້ ເມື່ອສັດອັນຕະລາຍເຂົ້າໄປໃນພື້ນທີ່ທີ່ມີປະຊາກອນອາໄສຢູ່ ທ່າມກາງກໍລະນີການໂຈມຕີຂອງໝີທີ່ເພີ່ມຂຶ້ນ.

ກອງປະຊຸມຄະນະລັດຖະມົນຕີ ໄດ້ຜ່ານຮ່າງກົດໝາຍສະບັບປັບປຸງ ແນໃສ່ເຮັດໃຫ້ການຕອບໂຕ້ໄດ້ໄວ ແລະ ມີປະສິດທິຜົນສູງຂຶ້ນກວ່າເກົ່າ ເມື່ອທຽບໃສ່ບັນດາມາດຕະການໃນປັດຈຸບັນ, ເຊິ່ງອະນຸຍາດໃຫ້ຍິງສັດອັນຕະລາຍໄດ້ ສະເພາະເມື່ອຜູ້ຄົນຕົກຢູ່ໃນອັນຕະລາຍເທົ່ານັ້ນ.

ຖ້າຫາກກົດໝາຍສະບັບປັບປຸງ ຖືກປະກາດໃຊ້ໃນກອງປະຊຸມລັດຖະສະພາທີ່ພວມດຳເນີນຢູ່, ຄາດວ່າກະຊວງສິ່ງແວດລ້ອມ ຈະບັງຄັບໃຊ້ກົດໝາຍໃນລະດູໃບໄມ້ຫຼົ່ນປີນີ້ເຊິ່ງແມ່ນໄລຍະທີ່ໝີມີຄວາມຢາກອາຫານສູງສຸດ ກ່ອນທີ່ຈະຈຳສິນໃນລະດູໜາວ (hibernation).

ມາດຕະການໃໝ່ນີ້ ຈະອະນຸຍາດໃຫ້ລັດຖະບານທ້ອງຖິ່ນ ສາມາດຕອບໂຕ້ຕໍ່ສະຖານະການຕ່າງໆ ເຊັ່ນ: ໝີທີ່ຍັງຢູ່ໃນເຮືອນ ຫຼື ອາຄານ ເປັນເວລາຍາວນານ.

ຕາມຕົວເລກທີ່ເປັນທາງການ, ນັບແຕ່ເມສາປີ 2023 ເຖິງເດືອນມີນາ 2024, ໃນທົ່ວປະເທດ ມີ 219 ຄົນ ຖືກໝີໂຈມຕີ ໃນນີ້, ເຮັດໃຫ້ 6 ຄົນເສຍຊີວິດ ເຊິ່ງເປັນຕົວເລກສູງທີ່ສຸດນັບຕັ້ງແຕ່ມີການເລີ່ມຕົ້ນບັນທຶກສະຖິຕິເມື່ອເກືອບສອງທົດສະວັດຜ່ານມາ.

ຮ່າງກົດໝາຍດັ່ງກ່າວ ຈະກຳນົດເງື່ອນໄຂສະເພາະສຳລັບການຍິງສຸກເສີນ, ເຊັ່ນເວລາທີ່ມັນຍາກທີ່ຈະຈັບສັດໄດ້ໄວ ໂດຍບໍ່ຕ້ອງໃຊ້ປືນ ແລະ ບໍ່ມີຄວາມສ່ຽງທີ່ລູກປືນຈະຖືກຄົນ.

# ສະພາແຫ່ງຊາດກຳປູເຈຍ ຜ່ານຮ່າງກົດໝາຍລົງໂທດ ຜູ້ທີ່ບໍ່ຍອມຮັບຄວາມໂຫດຮ້າຍຂອງຂະເໝນແດງ



(AFP) - ເມື່ອວັນອັງຄານທີ 18 ກຸມພາຜ່ານມາ, ສະມາຊິກສະພາແຫ່ງຊາດກຳປູເຈຍທັງ 115 ທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ລົງຄະແນນສຽງເປັນເອກະສັນຮັບຮອງເອົາຮ່າງກົດໝາຍດຳເນີນຄະດີກັບບຸກຄົນໃດກໍຕາມທີ່ມີແນວຄິດປະຕິເສດ ຫຼື ໃຫ້ອະໄພຕໍ່ຄວາມໂຫດຮ້າຍທີ່ກໍ່ຂຶ້ນໂດຍລັດຖະບານຂະເໝນແດງ ເຊິ່ງລວມທັງການຂ້າລ້າງເຜົ່າພັນ, ອາຊະຍາກຳຕໍ່ມະນຸດຊາດ ແລະ ອາຊະຍາກຳສົງຄາມ.

ຕະຫຼອດໄລຍະເວລາທີ່ລັດຖະບານຂະເໝນແດງປົກຄອງປະເທດລະຫວ່າງປີ 1975-1979, ມີປະຊາຊົນເສຍຊີວິດປະມານ 2 ລ້ານຄົນ ຈາກການຖືກທໍລະມານທາງຮ່າງກາຍແລະຈິດໃຈ ບໍ່ວ່າຈະເປັນຄວາມອຶດຫິວ, ການບັງຄັບໃຊ້ແຮງງານ, ຄວາມຮຸນແຮງທາງເພດ ແລະ ການຂ້ານອກກົດໝາຍ.

ຮ່າງກົດໝາຍດັ່ງກ່າວ ຈະຖືກສົ່ງໄປຍັງສະພາສູງເພື່ອອະນຸມັດ, ເຊິ່ງເປັນການດຳເນີນການຕາມຮູບແບບ ແລະ ຈະມີຜົນສັກສິດເມື່ອໄດ້ລົງນາມໂດຍພະບາດສົມເດັດ ໂນໂຣດົມ ສີຫາໂມນີ.

ປັດຈຸບັນ, ຂຽວ ສຳພັນ (Khieu Samphan) ອາຍຸ 93 ປີ, ຖືເປັນອະດີດສະມາຊິກລັດຖະບານຂະເໝນແດງພຽງຄົນດຽວທີ່ຍັງມີຊີວິດຢູ່ ແລະ ສານໄດ້ຕັດສິນຊີ້ຂາດເມື່ອປີ 2022 ໃຫ້ຮັບໂທດຕິດຄຸກຕະຫຼອດຊີວິດ.



## ກອງທຶນ...

(ຕໍ່ຈາກໜ້າ 1)

ສສ.ຫວຽດນາມ ປະຈຳ ສປປ ລາວ; ທັງນີ້, ກໍເພື່ອພົບປະແລກປ່ຽນບາງບົດຮຽນ, ຂໍ້ມູນຂ່າວສານຕ່າງໆລະຫວ່າງຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ກັບຄະນະພັນລະຍາຂອງນັກການທູດ ສະຖານເອກອັກຄະລັດຖະທູດ ສສ.ຫວຽດນາມປະຈຳສປປລາວເພື່ອກ້າວໄປສູ່ການຊຸກຍູ້ການຮ່ວມມືກັບບັນດາອົງການຊ່ວຍເຫຼືອທາງສັງຄົມຕ່າງໆຂອງປະເທດຫວຽດນາມ ທັງເປັນການປະກອບສ່ວນເຂົ້າໃນການເພີ່ມພູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳ.

ໃນການພົບປະ, ສະຫາຍນາງ ມະນີວັນ ເຍຍປາວເຮີ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ສະເໜີໂດຍຫຍໍ້ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ, ສະຫາຍ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ມີຄຳເຫັນຕໍ່ການພົບປະສອງຝ່າຍ; ຈາກນັ້ນ, ຄະນະຜູ້ແທນທັງສອງຝ່າຍກໍໄດ້ປະກອບຄຳເຫັນແລກປ່ຽນບົດຮຽນນຳກັນ. ພາຍຫຼັງສຳເລັດການພົບປະ, ຍັງໄດ້ເຂົ້າຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດອີກດ້ວຍ.

**(ສອນສັກ ວັນວິໄຊ)**

# ໂຄງປະກອບລັດຖະບານ ແລະ ສະພາແຫ່ງຊາດຫວຽດນາມ

**# ຮຽບຮຽງໂດຍ: ວິລະພັດ ພາບວິໄຊ**







ກອງປະຊຸມສະໄໝວິສາມັນເທື່ອທີ 9 ຂອງສະພາແຫ່ງຊາດຫວຽດນາມ ຊຸດທີ XV ທີ່ດຳເນີນລະຫວ່າງວັນທີ 12-19 ກຸມພາ2025; ສະພາແຫ່ງຊາດໄດ້ລົງຄະແນນສຽງຮັບຮອງເອົາມະຕິວ່າດ້ວຍໂຄງປະກອບການຈັດຕັ້ງຂອງລັດຖະບານແລະມະຕິວ່າດ້ວຍໂຄງປະກອບຂອງສະພາແຫ່ງຊາດ ໃນວາລະຕອນເຊົ້າ ແລະ ຕອນບ່າຍວັນອັງຄານທີ 18 ກຸມພາ ຕາມລຳດັບ.

ປັດຈຸບັນ, ໂຄງປະກອບການຈັດຕັ້ງຂອງລັດຖະບານລວມມີ 14 ກະຊວງ ແລະ 3 ອົງການລັດທຽບເທົ່າກະຊວງ ຄື: 1. ກະຊວງປ້ອງກັນປະເທດ; 2. ກະຊວງຕຳຫຼວດ; 3. ກະຊວງການຕ່າງປະເທດ; 4. ກະຊວງພາຍໃນ; 5. ກະຊວງຍຸຕິທຳ; 6. ກະຊວງການເງິນ; 7. ກະຊວງອຸດສາຫະກຳ ແລະ ການຄ້າ; 8. ກະຊວງກະສິກຳ ແລະ ສິ່ງແວດລ້ອມ; 9. ກະຊວງກໍ່ສ້າງ; 10. ກະຊວງວັດທະນະທຳ, ກິລາແລະທ່ອງທ່ຽວ; 11. ກະຊວງວິທະຍາສາດແລະເຕັກໂນໂລຊີ; 12. ກະຊວງສຶກສາ ແລະ ການເຝິກອົບຮົມ; 13. ກະຊວງສາທາລະນະສຸກ; 14. ກະຊວງຊົນເຜົ່າ ແລະສາສະໜາ; 15. ທະນາຄານແຫ່ງລັດຫວຽດນາມ; 16. ອົງການກວດກາລັດຖະບານ; 17. ຫ້ອງວ່າການລັດຖະບານ.

ບັນດາກະຊວງ ແລະ ອົງການຊຸດໃໝ່ ຈະເລີ່ມດຳເນີນງານຢ່າງເປັນທາງການນັບແຕ່ວັນທີ 01 ມີນານີ້.

ນອກຈາກນີ້, ຍັງມີ 5 ອົງການ ທີ່ຂຶ້ນກັບລັດຖະບານ ຄື: 1. ວິທະຍຸກະຈາຍສຽງຫວຽດນາມ, 2. ໂທລະພາບຫວຽດນາມ, 3. ສຳນັກຂ່າວສານຫວຽດນາມ, 4. ສະຖາບັນວິທະຍາສາດສັງຄົມຫວຽດນາມ, 5. ສະຖາບັນວິທະຍາສາດ ແລະ ເຕັກໂນໂລຊີຫວຽດນາມ.

ສະພາແຫ່ງຊາດ ຍັງໄດ້ຮັບຮອງເອົາຮອງນາຍົກລັດຖະມົນຕີຜູ້ໃໝ່ 2 ທ່ານ ຄື: ທ່ານ ມ່າຍວັນຈິງແລະທ່ານຫງວຽນຈີຢຸງ, ເພີ່ມຈຳນວນຮອງນາຍົກລັດຖະມົນຕີຂຶ້ນເປັນ 7 ທ່ານ.

ທ່ານ ຫງວຽນ ແໝ້ງຮຸ່ງ ໄດ້ຮັບເລືອກຕັ້ງເປັນລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ; ໃນຂະນະທີ່ລັດຖະມົນຕີກະຊວງຂົນສົ່ງ ທ່ານ ເຈິ່ນ ຮົ່ງ ມິ່ງ ຈະດຳລົງຕຳແໜ່ງເປັນລັດຖະມົນຕີກະຊວງກໍ່ສ້າງ, ພາຍຫຼັງກະຊວງຂົນສົ່ງແລະກະຊວງກໍ່ສ້າງ ລວມເຂົ້າກັນ.

ທ່ານ ດ່າວ ຫງັອກ ຢຸ່ງ ລັດຖະມົນຕີກະຊວງແຮງງານ, ທະຫານເສຍອົງຄະແລະສະຫວັດດີການສັງຄົມ ໄດ້ຮັບການແຕ່ງຕັ້ງເປັນລັດຖະມົນຕີກະຊວງຊົນເຜົ່າ ແລະ ສາສະໜາ; ກະຊວງຊົນເຜົ່າ ແລະ ສາສະໜາ ໄດ້ຮັບການສ້າງຕັ້ງຂຶ້ນບົນພື້ນຖານຄະນະກຳມະການຊົນເຜົ່າ ໂດຍໄດ້ຮັບເອົາເພີ່ມຕື່ມບັນດາໜ້າທີ່, ວຽກງານແລະການຈັດຕັ້ງຂອງອົງການລັດກ່ຽວກັບເລື່ອງສາສະໜາຈາກກະຊວງພາຍໃນ.

ກະຊວງແຮງງານ, ທະຫານເສຍອົງຄະ ແລະ ສະຫວັດດີການສັງຄົມ ໄດ້ລວມເຂົ້າກັບກະຊວງພາຍໃນເພື່ອສ້າງຕັ້ງເປັນກະຊວງພາຍໃນໃໝ່; ໃນຂະນະທີ່ກະຊວງແຜນການ ແລະ ການລົງທຶນ ລວມເຂົ້າກັບກະຊວງການເງິນ.

ທ່ານເລ ມິງ ຮວ່ານ ລັດຖະມົນຕີກະຊວງກະສິກຳ ແລະ ພັດທະນາຊົນນະບົດ ແລະ ທ່ານ ຫວູ ຮົ່ງ ແທ່ງ ປະທານກຳມາທິການເສດຖະກິດຂອງສະພາແຫ່ງຊາດ ໄດ້ຮັບເລືອກຕັ້ງເປັນຮອງປະທານສະພາແຫ່ງຊາດ, ເພີ່ມຈຳນວນຮອງປະທານສະພາແຫ່ງຊາດຂຶ້ນເປັນ 6 ທ່ານ.

ລັດຖະບານຊຸດໃໝ່ ຈະປະກອບດ້ວຍສະມາຊິກ24ທ່ານ ໃນນັ້ນມີນາຍົກລັດຖະມົນຕີ 1 ທ່ານ, ຮອງນາຍົກລັດຖະມົນຕີ 7 ທ່ານ (1 ທ່ານ ຄວບຕຳແໜ່ງລັດຖະມົນຕີກະຊວງການຕ່າງປະເທດ), ລັດຖະມົນຕີ 14 ທ່ານ (1 ທ່ານ ເປັນຫົວໜ້າຫ້ອງວ່າການລັດຖະບານ) ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ 2 ທ່ານ.

ປັດຈຸບັນ, ໂຄງປະກອບຂອງສະພາແຫ່ງຊາດ ລວມມີ: ສະພາຊົນເຜົ່າ; 7 ກຳມາທິການ ຄື: (1) ກົດໝາຍ ແລະ ຍຸຕິທຳ (2) ເສດຖະກິດ ແລະ ການເງິນ (3) ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການຕ່າງປະເທດ (4) ວັດທະນະທຳ ແລະ ສັງຄົມ (5) ວິທະຍາສາດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (6) ວຽກງານສະມາຊິກສະພາແຫ່ງຊາດ (7) ຄຳຮ້ອງຂໍຄວາມເປັນທຳ ແລະ ການຕິດຕາມກວດກາ; ແລະ ຫ້ອງວ່າການສະພາແຫ່ງຊາດ.

ປັດຈຸບັນ, ຄະນະປະຈຳສະພາແຫ່ງຊາດ ມີ 19 ທ່ານ ໃນນີ້ມີປະທານ 1 ທ່ານ, ຮອງປະທານ 6 ທ່ານ ແລະ ກຳມະການ 12 ທ່ານ.

**(ຂໍ້ມູນຈາກເວັບໄຊ: daibieunhandan.vn, vietnamnews.vn ແລະ quochoi.vn)**

ເຝົ້າເບິ່ງ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

# ຂຶ້ນຄ່າທຳນຽມຜູ້ເຂົ້າພັກໃນໂຮງແຮມ ເພື່ອຫຼຸດຜ່ອນຈຳນວນນັກທ່ອງທ່ຽວລົງ

ໃນບົດກ່ອນໆ ເຄີຍສະເໜີມາແລ້ວກ່ຽວກັບການປັບປຸງລະບຽບການ, ລະບົບການຄຸ້ມຄອງໂຮງແຮມ ແລະ ເຮືອນພັກໃນຍີ່ປຸ່ນ ເຊັ່ນ ກ່ອນງານມະຫະກຳກິລາໂອແລມປິກຢູ່ນະຄອນຫຼວງໂຕກຽວໃນປີ 2020 (ແຕ່ເລື່ອນໄປຈັດໃສ່ປີ 2021 ຍ້ອນບັນຫາການລະບາດຂອງພະຍາດໂຄວິດ-19) ໃນເວລານັ້ນ ມີຂ່າວວ່າ ທາງການຍີ່ປຸ່ນໄດ້ຈັດແຈງຫ້ອງນອນໃຫ້ເໝາະສົມ ແລະ ເປັນທີ່ຮັບໄດ້ສຳລັບບັນດາແຂກທີ່ມາຈາກຫຼາຍປະເທດ ທີ່ມີຄ່ານິຍົມ ແລະ ອຸດົມການແຕກຕ່າງກັນ. ຄະນະກຳມະການວ່າດ້ວຍການບໍລິການທີ່ພັກຂອງຍີ່ປຸ່ນ ໄດ້ເຮັດຊຳລະສະສາງບັນດາຮູບພາບ, ໜັງສືແລະເຄື່ອງໝາຍຕ່າງໆຢູ່ພາຍໃນຫ້ອງນອນທີ່ເຫັນວ່າມີຄວາມອ່ອນໄຫວ, ກະທົບໄວ ແລະ ມີຄວາມສ່ຽງຈະແຕະຕ້ອງເຖິງຈິດໃຈຂອງບັນດາແຂກທີ່ໄປພັກເຊົາ ເຊັ່ນ: ຮູບໂປ້, ວີດີໂອສຳລັບຜູ້ໃຫຍ່, ປຶ້ມເລື່ອງທີ່ມີເນື້ອໃນແຕະຕ້ອງກ່ຽວກັບຄວາມເຊື່ອຖື, ເຊື້ອຊາດ ແລະ ອື່ນໆ; ຂ່າວບອກວ່າ ສິ່ງຂອງທີ່ກ່າວມານັ້ນ ໄດ້ຖືກເລີກຮື້ອອກຈາກຫ້ອງນອນຂອງແຂກທັງໝົດ. ຫຼາຍປີກ່ອນໜ້ານັ້ນ ກໍເຄີຍມີຂ່າວວ່າ ຄ່າໂຮງແຮມຢູ່ຍີ່ປຸ່ນນັ້ນລາຄາແພງຫຼາຍ ນອກນັ້ນ, ຍັງມີການເກັບຄ່ານອນເປັນລາຍບຸກຄົນ ຕົວຢ່າງ: ຫ້ອງນອນລາຄາຄືນລະ 100 ໂດລາ ຖ້ານອນ 2 ຄົນ ກໍຈະເກັບ 200 ໂດລາ ເຊິ່ງກໍເຮັດໃຫ້ມີສຽງຈົ່ມວ່າຈາກແຂກ, ສຸດທ້າຍກໍມີຂ່າວວ່າ ການເກັບຄ່າແບບນີ້ໄດ້ຖືກຍົກເລີກໄປ ອັນນີ້ແມ່ນຂ່າວຈາກປາກແຂກທີ່ເຄີຍໄປພັກເຊົາມາ ອາດບໍ່ຈິງກໍໄດ້; ສ່ວນຜູ້ຂຽນເອງກໍເຄີຍໄປພັກເຊົາຢູ່ໂຮງແຮມໃນຍີ່ປຸ່ນຫຼາຍເທື່ອ ແຕ່ກໍບໍ່ປາກົດເຫັນການເກັບຄ່າຫ້ອງແບບນັ້ນ, ສ່ວນວ່າລາຄາແພງນັ້ນມັນຂຶ້ນກັບລະດັບການຄອງຊີບໃນຍີ່ປຸ່ນເອງຫັ້ນລະ.

ມາບັດນີ້ ໄດ້ມີຂ່າວໃຫຍ່ກ່ຽວກັບອົງການປົກຄອງນະຄອນຫຼວງໂຕກຽວ ໄດ້ເປີດເຜີຍແຜນການປັບຂຶ້ນພາສີສຳລັບເຂົ້າພັກເຊົາຢູ່ໂຮງແຮມໃນນະຄອນຫຼວງໂຕກຽວ (ໜັງສືພິມປະຊາຊົນ ສະບັບວັນທີ 20 ມັງກອນ 2025) ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ຫ້ອງພັກລາຄາຕ່ຳກວ່າ 6,000 ເຢັນຕໍ່ຄົນຕໍ່ຄືນ, ແຂກເຂົ້າພັກຈະຕ້ອງເສຍພາສີ 200 ເຢັນຕໍ່ຄົນຕໍ່ຄືນ;
- ຫ້ອງພັກລາຄາລະຫວ່າງ 6,000-19,999 ເຢັນ, ພາສີຕົກເປັນ 4,000 ເຢັນ;
- ຫ້ອງພັກລາຄາລະຫວ່າງ 20,000-49,999 ເຢັນ, ພາສີຕົກເປັນ 1,000 ເຢັນ;
- ຫ້ອງພັກລາຄາລະຫວ່າງ 50,000-99,999 ເຢັນ, ມູນຄ່າພາສີ 4,000 ເຢັນ;
- ຫ້ອງພັກລາຄາ 100,000 ຕໍ່ຄົນຕໍ່ຄືນ, ແຂກພັກຈະຕ້ອງໄດ້ເສຍພາສີ ຫຼື ຄ່າທຳນຽມຈຳນວນ 10,000 ເຢັນ.

ເວົ້າໄດ້ວ່າຄ່າທຳນຽມ ຫຼື ພາສີ ທີ່ແຂກພັກຕ້ອງໄດ້ເສຍເວລາບໍລິການຢູ່ໂຮງແຮມໃນນະຄອນຫຼວງໂຕກຽວນັ້ນ ສູງທີ່ສຸດທຽບກັບບາງຕົວເມືອງໃນຍີ່ປຸ່ນທີ່ເຄີຍເກັບຢູ່ໃນປັດຈຸບັນ ເຊັ່ນໃນເມືອງນິເຊໂກະ ແຂວງຮອກໄກໂດ; ແນວໃດກໍດີ, ເຖິງລາຄາພັກເຊົາຢູ່ນະຄອນຫຼວງໂຕກຽວຈະອ່າວສູງ ແຕ່ກໍກຸ້ມຄ່າ ເພາະໂຕກຽວແມ່ນນະຄອນທີ່ເກົ່າແກ່ເປັນຕຳນານ ແລະ ເປັນໜຶ່ງໃນສະຖານທີ່ທ່ອງທ່ຽວທີ່ມີຄົນທົ່ວໂລກກວມຫຼາຍທີ່ສຸດ. ຂ່າວບໍ່ໄດ້ບອກຈະແຈ້ງວ່າການປັບຂຶ້ນພາສີ ຫຼື ຄ່າທຳນຽມນັ້ນ ມີຈຸດປະສົງຕົ້ນຕໍແນວໃດ, ບອກພຽງວ່ານະຄອນຫຼວງໂຕກຽວ ພວມປະສົບກັບບັນຫານັກທ່ອງທ່ຽວລົ້ນເມືອງ ຍ້ອນວ່າການທ່ອງທ່ຽວຂາເຂົ້າຂະຫຍາຍຕົວຢ່າງວ່ອງໄວ; ກໍເລີຍມີຜູ້ຕວງເອົາເອງວ່າ ການເກັບພາສີຄ່າພັກແພງຂຶ້ນນັ້ນ ອາດຈະແມ່ນເພື່ອຫຼຸດຜ່ອນຈຳນວນນັກທ່ອງທ່ຽວລົງກໍເປັນໄດ້.

ສຳລັບຢູ່ແຫຼ່ງທ່ອງທ່ຽວວັງວຽງຂອງພວກເຮົານັ້ນ ເມື່ອມີເທສະການງານບຸນໃຫຍ່ ໂຮງແຮມກໍຈະຂຶ້ນລາຄາຫ້ອງນອນສູງຂຶ້ນ, ເລື່ອງນີ້ຍັງເປັນບັນຫາຖົກຖຽງກັນຢູ່ ວ່າສົມຄວນ ຫຼື ບໍ່, ເພາະແຂກພັກອາດຈະຖືວ່າເປັນການສວຍໂອກາດກໍໄດ້.

ທະນາຄານພັດທະນາລາວ
LDB Bank




# ທາກໍຖືພາມາໃໝ່ໆ

*#ບ່າວກະບື*

ຍິງໜຸ່ມຊື່ແອແຕ໋ວ ຂຶ້ນລົດເມທີ່ແໜ້ນອັ່ງໄປດ້ວຍຜູ້ໂດຍສານ. ເມື່ອເຫັນວ່າຕົນເອງບໍ່ສາມາດທົນຕໍ່ສະພາບໂຍກເຍກຂອງລົດໄດ້, ນາງເລີຍຂໍໃຫ້ໂດຍສານຊາຍຄົນໜຶ່ງ ສະຫຼະຕັ່ງໃຫ້ນາງນັ່ງ ໂດຍບອກວ່ານາງພວມຖືພາ. ສຸພາບບຸລຸດຄົນນັ້ນລຸກຂຶ້ນ ແລະ ມອບຕັ່ງລາວໃຫ້ນາງນັ່ງ. ໃນຂະນະທີ່ຢືນຢູ່ຂ້າງໆນາງນັ້ນ, ຊາຍຄົນນີ້ສັງເກດເບິ່ງຕົນໂຕຂອງນາງຄັກໆແລະຮູ້ສຶກວ່າຕົນເອງຖືກນາງຕົ້ມ. ເຂົາຖາມອອກມາວ່າ: "ນ້ອງສາວ... ເຈົ້າຖືພາແຕ່ຍາມໃດ?".

ແອແຕ໋ວ ຕອບວ່າ: "ຖືພາໃນຕອນເຊົ້າມື້ນີ້ເອງ".

# Instant Pregnancy

*#BAOKBU*

A young woman names Ae Taew boarded a crowded bus. Finding it difficult to bear the jolts, she requested a male passenger to give up his seat to her because she was pregnant. The gentleman stood up and offered his seat to her. Standing by her side, he carefully examined her anatomy and felt cheated. He asked "Nong Sao (young woman) when did you become pregnant?"

"Only this morning" replied Ae Taew.

ຄຳນພາສາ ກາຕູນ



ທຸກເທສະການ ຈະມີນັກຮ້ອງສຽງຫຼົງ ຮ້ອງເພງກ່ອມເຮືອນລ້ຽງນອນ

● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພານວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອນສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ